# ໃບໄມ້ຫລົ່ນ



*ນະວະນິຍາຍຂນາດສັ້ນເລື້ອງນີ້ຖືກຂຽນຂື້ນດ້ວຍດວງໃຈທີ່ປວດຮ້າວ*
*ເຖີງແມ່ນວ່າເລື້ອງນີ້ຈະເປັນພຽງພາບຈາກຈິນຕະນາການໂດຍສ່ວນໃຫຍ່*
*ແຕ່ມັນກໍສະທ້ອນໃຫ້ເຫັນເຖີງວ່າແມ່ນຫຍັງຄືສິ່ງທີ່ຫົວໃຈຕ້ອງການ*
*ແລະແມ່ນຫຍັງຄືສິ່ງທີ່ຈິດວິນຍານຂາດບໍ່ໄດ້ ບາງຄັ້ງຄາວກໍແມ່ນວ່າສອງສິ່ງນີ້ເປັນຄົນລະຢ່າງ*
*ຊຶ່ງນັ້ນກໍຫມາຍຄວາມວ່າ ສິ່ງນຶ່ງຈະຕ້ອງຖືກປະຖີ້ມໄປ ບໍ່ວ່າສິ່ງນັ້ນຈະເປັນສິ່ງໃດ*
*ມັນຄົງຈະທໍຣະມານບຸກຄົນນັ້ນ ຄືກັບໃບໄມ້ທີ່ຮ່ວງຫລົ່ນ*
*ຄົນໆນັ້ນຈໍາຕ້ອງໄດ້ພັດພາກຈາກສິ່ງທີ່ເຂົາເຄີຍຮັກເຄີຍຫວງໄປ*
*ດັ່ງກະວີທີ່ລໍາພຶງລໍາພັນວ່າ...*

ວັນເວລາມາເຖີງແລ້ວ ທີ່ຮັກ
ສາຍລົມໂຊຍຊື່ນໂບກພັດ
ແສງສີທອງປະທັບແສງຮອງໆບິນຜິວພື້ນ
ບໍ່ດົນ ທັງສາຍລົມແລະແສງແດດ ກໍຈະຊື່ມຊາບເຂົ້າໄປໃນຜິວກາຍຂອງເຈົ້າ

ເມື່ອເຖິງເວລານັ້ນ  ເຈົ້າກໍຈະຈາກຂ້ອຍໄປໄກຈົນສຸດຂອບຟ້າ
ແລະນັບວັນ  ລະຍະທາງເດີນຂອງພວກເຮົາ  ກໍຈະເພີ້ມທະວີຄູນ
ຕໍ່ໄປນີ້  ຈະມີພຽງຈົດຫມາຍເປັນສື່ສໍາພັນ
ທີ່ລາຍມືປາກົດເປັນໃບຫນ້າ  ດວງຕາແລະຮອຍຍີ້ມໃຫ້ຝັນເຫັນ

*ແລະນັ້ນເອງຄືທີ່ມາຂອງນະວະນິຍາຍເລື້ອງ  ໃບໄມ້ຫລົ່ນ...*

ຫລຽວອອກໄປຂ້າງນອກຜ່ານທາງປ່ອງຢ້ຽມ  ສາຍຕາຂອງນາງມອງເຫັນຫິມະທີ່ກໍາລັງຕົກລົງມາ
ໃນທົ່ວທຸກສາຣະທິດ – ເທິງໃບຫຍ້າທີ່ຫ່ຽວແຫ້ງ  ເທິງທາງຮ່ອມນ້ອຍທີ່ຕັດເຂົ້າຫນ້າບ້ານ
ເທິງລົດທີ່ຈອດຢູ່ຂ້າງນອກເຮືອນ  ເທິງກິ່ງກ້ານທີ່ຊຶບເຊົາຂອງຕົ້ນໄມ້
ແລະເທິງຫລັງຄາເຮືອນທີ່ເດັ່ຽຣະດາດຢູ່ຟາກຫນ້າໄປພຸ້ນ
ທຸກສິ່ງຢ່າງລ້ວນແລ້ວແຕ່ປົກຄຸມໄປດ້ວຍສີຂາວຂອງຫິມະ  ມັນຄົງຈະຫນາວຫລາຍ
ວຽງປະພາຄິດລໍາພຶງລໍາພັນແຕ່ຜູ່ດຽວ



ເຖິງແມ່ນວ່າອາກາດຈະອຸ່ນຢູ່ໃນເຮືອນທີ່ເປັນຕາຢູ່ຂອງນາງ
ແຕ່ນາງກໍອົດຮູ້ສຶກທີ່ຈະຫນາວສະທ້ານເຂົ້າໄປຈົນເຖິງຂົ້ວຫົວໃຈບໍ່ໄດ້  ດ້ວຍຄວາມສັດຈິງແລ້ວ
ນາງບໍ່ສາມາດທີ່ຈະເຮັດໃຫ້ເປືອກຕາຂອງນາງຫລັບລົງໄດ້ຈົນວ່າຕລອດທັງຄືນ
ຈົດຫມາຍຂອງເຂົາຍັງຄົງເປີດອ້າຢູ່ທີ່ໂຕະນ້ອຍຂ້າງຕຽງນອນຫົວບ່ອນ  ໃນຂະນະນີ້
ຊາຍຫນຸ່ມທີ່ດວງກະມົນຂອງນາງມອບໃຫ້ນັ້ນ
ຄົງຈະຢູ່ໃນເຮືອບິນເທິງຟາກຟ້າມະຫາສມຸດແປຊີຟິກບ່ອນໃດບ່ອນນຶ່ງ

ຢາດນໍ້າຕາທີ່ເກາະຫ້ອຍຢູ່ທີ່ເບົ້າຕາຂອງນາງຕັ້ງແຕ່ຄືນວານນີ້
ເລີ້ມທະຍອຍກັນຢືດອອກມາຜ່ານພວງແກ້ມສີບົວອ່ອນໆຂອງນາງ  ພາຍໃຕ້ຜ້າຫົ່ມນວມຜືນໃຫຍ່

ວຽງປະພາພິກຕົວໄປມາຢູ່ເທິງຕຽງນອນ ຢ່າງຄົນທີ່ບໍ່ຮູ້ຈະເຮັດຫຍັງດີ
ທຸກຢ່າງທີ່ສາຍຕາຂອງນາງສັມຜັດແລະແຕະຕ້ອງ
ລ້ວນແລ້ວແຕ່ເຕືອນໃຫ້ນາງຕ້ອງໄດ້ຄິດເຖິງເຂົາ – ບັດນ້ອຍໆຢູ່ເທິງໂຕະ ເສື້ອຜ້າຢູ່ໃນຕູ້
ແລະແມ້ນກະທັ່ງຫິມະແຕ່ລະເມັດທີ່ໂປ່ຍລົງມາຢູ່ຂ້າງນອກ ນາງຄິດວ່າ ຫາກເຂົາຍັງຢູ່ທີ່ນີ້
ບັດນ້ອຍ ເສື້ອຜ້າ ແລະຫິມະແຕ່ລະເມັດຄົງຈະງົດງາມເປັນທີ່ປະທັບໃຈຍິ່ງຫນັກ
ທ່າທາງທີ່ສຸຂຸມອ່ອນນຸ່ມ ແລະຄຳເວົ້າທີ່ປຽບດັ່ງບົດກະວີຂອງເຂົາ
ຄົງຈະກະຊັບຮອຍເສົ້າໂສກໄປຈາກດວງຮືໄທຂອງນາງໄດ້ ອະນິຈາເຂົາບໍ່ໄດ້ຢູ່ນະທີ່ນີ້ອີກແລ້ວ
ຈະເຫລືອໄວ້ກໍພຽງຄວາມຊົງຈຳທີ່ມີເຂົາເທົ່ານັ້ນ...
ຮັກແຣກແຕ່ຫາກຈາຣຶກໄວ້ໃນສ່ວນເລິກຂອງຫົວໃຈຢ່າງບໍ່ມີວັນທີ່ອາດຈະລືມເລືອນໄດ້

ກະວີຂອງເຂົາທີ່ຂຽນລົງທ້າຍຈົດຫມາຍນັ້ນອ່ານວ່າ...

ໃບນຶ່ງສອງໃບ
ປິວອ່ອນລົງຈົບເຖິງດິນ
ວັນກ່ອນ
ຂ້ອຍຍັງເຫັນ
ມັນແກ່ວງໄກ່ວໂບກໄປມາຕາມສາຍລົມ
ອ່ອນໄຫວຊຸ່ມຊື່ນເຢັນຕາ
ແຕ່ມາວັນນີ້
ບ່ອນທີ່ມັນເຄີຍຢູ່
ເຫລືອແຕ່ຄວາມຫວ່າງເປົ່າ
ຈືດຊືດມືດມົນຂົ່ມຂືນ
ຂ້ອຍບໍ່ຢາກເບິ່ງ
ຢາກຫລັບຕາໄປເທົ່າໃດໆ

..

II.

"ທ່ານຜູ່ມີກຽດທີ່ເຄົາລົບແລະເພື່ອນມິດທີ່ຮັກແພງທັງຫລາຍ
ບັດນີ້ເລີກງານຍາມດີທີ່ທຸກທ່ານຄອງຄອຍກໍມາຮອດມາເຖິງແລ້ວ ນັ້ນກໍຄືການເປົ່າທຽນ

ສັນຍາລັກຂອງວັນເກີດ ດັ່ງນັ້ນໃນນາມໂຄສົກຂ້າພະເຈົ້າຈຶ່ງຂໍເຊີນຊວນທຸກໆທ່ານທີ່ມາຮ່ວມພິທີ
ຈົ່ງຫຍັບເຂົ້າໃກ້ໆເພື່ອຈະເປັນສັກຂີພະຍານໃນການເປົ່າທຽນຄັ້ງນີ້ດ້ວຍ ແລະກໍຂໍເຊີນ

- ເຊີນນາງສາວວຽງປະພາເລີຍນໍ"

ພາຍຫລັງຈາກທີ່ໂຄສົກກ່າວສິ້ນສຸດລົງ
ມິດສະຫາຍກໍມະລຸ້ມມະຕຸມວຽງປະພາທີ່ຢືນຢູ່ໃກ້ໂຕະຂນົມເຄັກ ມີທຽນໄຂ໘໘ເຫລັ້ມຕັ້ງຢູ່ເທິງ
ຄືນນີ້ວຽງປະພາເດ່ນສງ່າຢູ່ໃນຊຸດສີຂາວບໍຣິສຸດ
ແສງທຽນຈາກຂນົມເຄັກສົ່ງແສງສະທ້ອນໃບຫນ້ານາງ ເຮັດໃຫ້ເປັນສີຣຸ່ມໆ ງາມລຽບໆ
ບໍ່ຕ່າງຫຍັງກັບນັກຮຽນສາວທີ່ໃບຫນ້າຊື່ໆໄຮ້ດຽງສາ
ໃຜເຫັນກໍອົດທີ່ຈະຖນຸຖນອມຫອມຮັກນາງບໍ່ໄດ້ເລີຍ

ພໍເວລາໄດ້໘໘ໂມງແລງ ຊຶ່ງເປັນເວລາທີ່ນາງລືມຕາເບິ່ງໂລກເມື່ອ໑໘ປີກ່ອນ
ແສງທຽນຈຳນວນສິບແປດເຫລັ້ມກໍດັບມອດລົງເທື່ອລະເຫລັ້ມສອງເຫລັ້ມ
ຈາກນັ້ນສຽງເພງສັ້ນໆແຕ່ຫາກມີຄວາມຫາຍທີ່ສຸດສຳຫລັບວັນນີ້ກໍດັງກ້ອງກັງວານຂຶ້ນ
Happy Birthday to you
Happy Birthday to you
Happy Birthday Happy Birthday
Happy Birthday to you
ແລະຕິດຕາມດ້ວຍຄຳອວຍໄຊໃຫ້ພອນແລະການຟ້ອນລຳທຳເພງດັ່ງຫົວຄ່ຳກໍດຳເນີນຕໍ່ໄປ



ວຽງປະພາກາຍເປັນດາວດວງເດັ່ນທີ່ການເຕັ້ນລຳຮອບໃດ ກໍມີຫນ້າຫລາຍຄົນທີ່ມາຂໍຟ້ອນນຳວ່າ
ເພື່ອເປັນກຽດໃນວັນມຸງຄຸນຂອງນາງນີ້ ນາງຈຶ່ງບໍ່ຫານປະຕິເສດ ແຕ່ເລີກລົງໄປ
ມັນກັບແມ່ນຄວາມງາມຄວາມຫນ້າຮັກຂອງນາງຕ່າງຫາກທີ່ຫລາຍຄົນຢາກຢູ່ໃກ້ຊິດແລະສນິດແນບ

ທີ່ມຸມນຶ່ງຂອງງານ
ອິສຣະນັ່ງຈ້ອງເບິ່ງເວທີລີລາດທີ່ມີຫນຸ່ມສາວເປັນຄູ່ໆຂຶ້ນໄປເຈີຍເຈີດດ້ວຍສາຍຕາທີ່ຊື່ນຊົມ
ວຽງປະພາກັບຄູ່ເຕັ້ນຂອງນາງຮູ້ສຶກວ່າ ຈະຢູ່ໃນສາຍຕາຂອງເຂົາທຸກອະຣິຍະບົດ
ເກືອບເປັນປະຈຳເຂົາຍິ້ມໃຫ້ນາງຢູ່ຜູ້ດຽວ
ບຸນມີຊຶ່ງນັ່ງຢູ່ໃກ້ໆອົດທີ່ຈະແປກໃຈບໍ່ໄດ້ທີ່ເພື່ອນຂອງເຂົາຄົນນີ້ ແນມໄປທາງເວທີລີລາດ
ແລ້ວກໍຍີ້ມຢູ່ບໍ່ແລ້ວບໍ່ເລົ່າຄ້າຍໆກັບວ່າຢູ່ຫັ້ນມີແນວໃຫ້ເປັນຕາຍິ້ມ
ຫລາຍເທື່ອເຂົາຈ້ອງຕາແນມເບິ່ງ ຄືບໍ່ມີຫຍັງໃຫ້ເປັນຕາຍິ້ມ ແປກ – ແປກແທ້ໆ

ເພື່ອຢາກຮູ້ວ່າ ເຈົ້າເພື່ອນຄົນນີ້ຂອງເຂົາຍິ້ມໃຫ້ໃຜ ເຂົາຈຶ່ງສະກິດຫນໍເບົາໆ
ປານນັ້ນອິສຣະກໍຕື່ນຍຸບ ຫັນມາຍິ້ມແຫ້ງໆໃຫ້ຫມູ່
“ມີເລື້ອງຫຍັງ ບຸນ?”
ອິສຣະຖາມແກ້ເກີ້ ບຸນມີເຫັນທ່າທີລຸກລົ້ນຂອງເພື່ອນ
ຈຶ່ງອົດສົງໃສບໍ່ໄດ້ວ່າຫນໍນີ້ເຮັດແນວໃດກະຕ້ອງມີເລື້ອງລັບລົມຄົມໃນແນ່ນອນ
ບໍ່ຊັ້ນຊິປະພຶດຕົວແປກໆແບບນີ້ບໍ່?
ດ້ວຍເຫດນັ້ນບຸນມີຈຶ່ງແກ້ງຢອກປານຕັສຮູ້ຄວາມໃນໃຈຂອງເພື່ອນວ່າ
“ກະຊິເລື້ອງຫຍັງ ກະເລື້ອງສາວນັ້ນຫັ້ນຫນາ ເຊັກຊີ (sexy) ເປັນບ້າເລີຍ ຫລືໂຕວ່າແນວໃດ?”
ອິສຣະອ້ຳໆອຶ້ງໆບໍ່ຈັກຈະຕອບແນວໃດ ໄດ້ແຕ່ຍິ້ມຈືດໆສະແດງວ່າ ກະຄືໂຕວ່າຫັ້ນລະ
ບຸນມີຈັບໄຕໄດ້ວ່າ ເພື່ອນຕ້ອງຍິ້ມຍ້ອນເລື້ອງຜູ້ຍິງແນ່ນອນ ແຕ່ເອະ! ຕັ້ງແຕ່ຄົບກັນມາ
ຫນໍນີ້ມັນບໍ່ເຄີຍສົນຜູ້ຍິງນີ້ຫນາ ເກີດໄປຕິດໃຈໃຜລະນໍ ເຖິງກັບເປັນຫນັກເຂົ້າຂັ້ນໂຄມາ (coma)
ແບບນີ້ ບໍ່ໄດ້! ຕ້ອງເຈາະໃຫ້ມັນເຫັນພຸງຫນໍ ບໍ່ທັນທີ່ບຸນມີຈະເອີຍຫຍັງ
ການເຕັ້ນລຳຮອບນັ້ນກໍຈົບລົງ
ບັງເອີນເຫລືອເກີນທີ່ວຽງປະພາຍ່າງກາຍມາທາງໂຕະຂອງສອງຫນຸ່ມ
ບຸນມີຜູ້ຊຶ່ງລື້ງແກ່ວນກັບວຽງປະພາເປັນຢ່າງດີ ຈຶ່ງເອີ້ນນາງມາຫາດ້ວຍຄວາມສນິດສນົມ
“ພາ! ມານີ້ບຸດນຶ່ງ”

ວຽງປະພາກ້າວມາຫາຊາຍໜຸ່ມຢ່າງວ່າງ່າຍ ບຸນມີທັນໄປຫາອິສຣະເພື່ອຈະແນະນຳໃຫ້ຮູ້ຈັກກັນ
ເທົ່ານັ້ນເອງເຂົາກໍພໍເຂົ້າໃຈສາເຫດທີ່ເພື່ອນຄົນນີ້ຍິ້ມໜັກຍິ້ມໜາໄດ້ເປັນຢ່າງດີ
ໃນຂະນະນັ້ນອິສຣະໜ້າແດງມືໄມ້ສັ່ນ ແລະທ່າທາງກໍລຸກລົນ ເບິ່ງເຂົາໄດ້ແຕ່ກົ້ມໜ້າຢ່າງອາຍໆ
ຊຶ່ງອາການແບບນີ້ ເຂົາບໍ່ເຄີຍເປັນມາກ່ອນຈັກເທື່ອ

ຫລັງຈາກແນະນຳຕົວໃຫ້ຮູ້ຈັກກັນແລ້ວ ບຸນມີຈຶ່ງຍິກຄິ້ວໃຫ້ວຽງປະພາ ພ້ອມກັບເວົ້າດັງໆ
ຫລິ້ນເອົາອິສຣະສະດຸ້ງໄປໝົດທັງຕົວ
"ພາ! ຮອບນີ້ ອິສຣະຂໍຈ່ອງນ້ອງເດີ ໂອເຄບໍ່?"
"ຊິເປັນຫຍັງ"
ເວົ້າແລ້ວນາງກໍຍິ້ມໃຫ້ອິສຣະແລະຍ່າງອອກໜ້າໄປສູ່ເວທີ
ອິສຣະເຮັດທ່າທາງອ້ຳໆອຶ້ງໆຈະລຸກກໍບໍ່ລຸກ ຈົນບຸນມີຕ້ອງທັງຊຸກທັງດັນໃຫ້ເຂົາຟ້າວຕາມນາງໄປ
"ໄປລະແມ່ ໂຕຊິຫາໂອກາດດີໆແບບນີ້ໄດ້ຢູ່ໃສ? ມັກເຂົາມັນກະຕ້ອງກ້າຕົ໋ວ"
"ກ້າ! ເລື້ອງກ້າກະໄຄ ແຕ່ນີ້ເຮົາໂລດເຕັ້ນບໍ່ເປັນເດ ໂຕຊິໃຫ້ເຮົາກ້າແນວໃດ?"
"ເປັນບໍ່ເປັນກະຊ່າງຫົວມັນ ຫຍັກຊ້າຍຫຍັກຂວາ ແລ້ວມັນຫາກຊິໄດ້ເລື້ອງດອກໜາ"
"ແຕ່..."
"ບໍ່ຕ້ອງແຕ່ຫຍັງ ໄປ໋! ໄປ ຈັກໜ້ອຍລາວຖ້າດົນເສັຽຄວາມຮູ້ສຶກໝົດ"
ອິສຣະຈົ່ມອຸຍໆຕາມທາງໄປສູ່ເວທີ ທ່າມກາງຮອຍຍິ້ມຮ່າຂອງບຸນມີທີ່ເຊັຽຢູ່ຂ້າງຫລັງຢ່າງສຸດໃຈ

ສຽງເພງສາກົນເລີ້ມຂຶ້ນແລ້ວ ອິສຣະຍິ່ງໜ້າແດງ ຈະຫຍັກຊ້າຍຫຍັກຂວາແຕ່ລະບາດ
ມັນກໍຊ່າງຍາກເຢັນຢ່າງແສນຈະເຫລືອເຂັນ
ຂາຂອງເຂົາຄືຈັ່ງວ່າໜັກປານເອົາໂງ່ນຫີນມາເຕັງໃສ່ກໍບໍ່ປານ
ວຽງປະພາຊຶ່ງຊິຮູ້ວ່າເຂົາເຕັ້ນບໍ່ເປັນ
ຈຶ່ງລະສາຍຕາຈາກເຂົາໄປທາງອື່ນເພື່ອໃຫ້ເຂົາບໍ່ໄດ້ມີອາການປະໝ່າ ວ່າມີຄົນກຳລັງຈ້ອງມອງ

ການເຕັ້ນລຳດຳເນີນໄປເປັນເວລາສາມສີ່ນາທີກໍຍຸຕິລົງ ທັນທີທີ່ສຽງດົນຕີດັບສຽງ
ອິສຣະເຖິງກັບຫາຍໃຈບາດໃຫຍ່ໆ ເມັດເຫື່ອນອງຢູ່ທົ່ວໃບໜ້າ ຕົ້ນແຂນແລະຫລັງຂອງເຂົາ
ວຽງປະພາກົ້ມຫົວລົງໃຫ້ໜ້ອຍນຶ່ງເປັນການອຳລາແລ້ວກໍຈາກໄປ ປະໃຫ້ເຂົາຢືນເຊື້
ບໍ່ທັນທີ່ຈະໄດ້ຂອບໃຈນາງທີ່ອົດສາເຕັ້ນກັບໂຕທຸ່ນເຊັ່ນເຂົາຈົນຈົບເພງ

ຫລັງຈາກເຂົາກັບມາຮອດໂຕະ ສຽງແຊວຂອງບຸນມີກໍດັງຂຶ້ນ

“ຍອດ! ຍອດເລີຍ ປານພະເອກກັບນາງເອກພຸ້ນເວີ້ຍ
ເປັນແນວນີ້ຊີງຊີບໍ່ຫມົ້ນຊິໄດ້ແຫ້ນທົ່ວໄກ່ໄວໆລະນໍບາດນີ້”

ອິສຣະບໍ່ໄດ້ສະອອນນຳຄຳແຊວຂອງຫມູ່ຈັກຫນ້ອຍ ໄດ້ແຕ່ປັ້ນຫນ້າຍັກໃສ່ ແຕ່ຄິດໄປຄິດມາແລ້ວ
ເມື່ອຄິດເຖິງເຈຕນາດີຂອງຫມູ່ ເຂົາຈຶ່ງຄາຍຫນ້າຍັກລົງ
ບໍ່ຂີ້ຮ້າຍເລີຍສຳຫລັບການເລີ້ມຕົ້ນຂອງຄວາມຮັກເຂົາ ເຊີ່ງບ໋ອງໆ
ປານນີ້ນາງຄົງອົດຫົວໃນໃຈໃຫ້ເຂົາເຂົ້າແລ້ວກໍບໍ່ຮູ້
ອິສຣະລິນນ້ຳສົ້ມລົງໃສ່ຈອກນ້ຳ ແລ້ວກໍຍິ້ມໃຫ້ຕົນເອງດ້ວຍຄວາມສຸກຢູ່ຜູ່ດຽວ

III.



ນະທີ່ມະຫາວິທະຍາໄລ
ອາກາດເຊົ້ານີ້ໃຕ້ຕົ້ນສັກເຢັນຣະຣື່ນດີ ສາຍລົມໂຊຍມາເປັນຮູດໆ
ໃບໄມ້ບາງໃບປີດລະລິ່ວຕາມແຮງລົມ ງາມຕາເປັນຢ່າງຍິ່ງ
ວຽງປະພານັ່ງຢູ່ເທິງຕັ່ງທີ່ເຮັດອ້ອມຕົ້ນໄມ້ຢ່າງສະບາຍ ມີປື້ມຮຽນຫົວນ້ອຍໆວາງຢູ່ເທິງຕັກ
ອ້ອມໆຂ້າງນາງໄກອອກໄກທີ່ພຸ່ມໄມ້ແລະເດີ່ນຫຍ້າ
ຈະເຫັນຫນຸ່ມສາວໃນຕາສີຟ້າອ່ອນຜົມສີທອງຄລໍຄເລັ່ງກັນຢ່າງບໍ່ແຄ (care) ຕໍ່ສາຍຕາຜູ່ໃດ

ຢູ່ອີກມຸມນຶ່ງຂອງມະຫາວິທະຍາໄລ ອິສຣະດ້ອມໆມອງໆມາຍັງບ່ອນທີ່ວຽງປະພາຢູ່
ຫລາຍເທື່ອເຂົາຢາກຈະເຂົ້າໄປຫານາງແຕ່ກໍບໍ່ກ້າ ເຫດການເປັນໄປໄດ້ຫລາຍມື້
ຫລືຈະວ່າຫລາຍອາທິດກໍເປັນໄດ້ ນັ້ນມັນເປັນເຫດການກ່ອນມື້ວັນເກີດຂອງວຽງປະພາ

ຊຶ່ງຂະນະນັ້ນເຂົາບໍ່ຕ່າງຫຍັງກັບເປັນຄົນແປກຫນ້າໃນສາຍຕາຂອງນາງເລີຍ
ຖ້າເຂົາຂືນຫນ້າດ້ານເຂົ້າໄປຫາ ມີຫວັງອາເຫລືອງອອກມາຢ່າງບໍ່ເປັນທ່າ
ມື້ນີ້ເຂົາຄິດວ່າເຂົາກ້າພຽງພໍແລະກໍມີເຫດຜົນພຽງພໍທີ່ຈະບໍ່ອາເຫລືອງອອກມາ
ຢ່າງຫນ້ອຍເມື່ອນາງເຫັນເຂົາ ກໍບໍ່ມີຕິວ່າຈະບໍ່ຈື່ ເຂົາຫມັ້ນໃຈແນວນັ້ນ
ອິສຣະໃຈເຕັ້ນຕຸບໆຍິ່ງເມື່ອຫຍັບເຂົ້າໃກ້ຍອດຍິງທີ່ເຂົາເຝົ້າຝັນຫາຈົນວ່າບໍ່ເປັນອັນກິນອັນນອນ
ແລະກໍອາດຈະເປັນຍ້ອນວ່ານາງນັ້ນວົນວຽນຢູ່ໃນຈິດສຳນຶກຂອງເຂົາຢ່າງບໍ່ມີທີທ່າວ່າຈະເວັ້ນວາງ
ຄວາມເປັນນັກກະວີທີ່ເຂົາບໍ່ຄິດວ່າຕົນນັ້ນຈະມີຈຶ່ງກໍ່ໃຫ້ເປັນເກີດຖ້ອຍຄຳດັ່ງລຸ່ມນີ້

## ດອກຟ້າ

໘໘ປີແລ້ວທີ່ດອກຟ້າດອກນີ້
ປະທັບພື້ນປະສຸທາ
ກິ່ງກ້ານຂອງເຈົ້າ
ສົ່ງກິ່ນຫອມຫວນ
ຟຸ້ງຂະຈອນໄປທົ່ວທ້ອງນະພາ

ໂອ້ດອກຟ້າ
ເຈົ້າຊ່າງເກີດມາ
ເພື່ອຊັບນ້ຳຕາຂອງຢາດນ້ຳຄ້າງ
ຊ່າງເຕີບໃຫຍ່
ເພື່ອເປັນມິ່ງຂວັນຂອງດອກຫຍ້າ
ແລະຊ່າງລ້ຳເລີກ
ເພື່ອຄວາມມຸມານະຂອງຊາຍຈົນໆຄົນນີ້



ຫາກເຈົ້າຮູ້
ຍາມເມື່ອເຈົ້າເອີ່ຍວາຈີ
ໂລກທັງໂລກຂອງຂ້ອຍ
ຈະງຽບນິ່ງສງັດຟັງເຈົ້າ
ຍາມເມື່ອເຈົ້າຍີ້ມຫົວ
ໂລກທັງໂລກຂອງຂ້ອຍ
ຈະຖືກແຕ່ມແຕ່ງ
ດ້ວຍຟ້າວັນໃຫມ່
ດວ້ຍສັກກຸນາທີ່ເຈີ້ຍເຈີດ
ດ້ວຍໃບໄມ້ທີ່ແກ່ວງໄກ່ວ
ດ້ວຍຄື້ນຟອງທີ່ລະຍິບລະຍັບ
ແລະດ້ວຍສຽງເພັງທີ່ຂັບກ່ອມໃຫ້ຫລັບຝັນ

ໂອ້ດອກຟ້າ
ນັບແຕ່໔໔ປີນີ້ຕໍ່ໄປ
ຂ້ອຍຈະເປັນສາຍລົມຄອຍຈູມພິດ
ເປັນສຽງເພັງຄອຍປອບຂວັນ
ແລະເປັນສາຍທາລາ
ຄອຍຊຸບຄວາມໃຝ່ຝັນຂອງເຈົ້າ
ໃຫ້ສົດໃສຢ່າງບໍ່ມີວັນຄາຍ
ໂອ້ດອກຟ້າ
ໂອ້ຍອດບູຊາ
ຮັກເຮົານີ້
ຂໍໃຫ້ມີແຕ່ຄໍາວ່າ
ປະດັບໄວ້ໃນດວງໃຈຂອງກັນແລະກັນ
ຕລາບຊົ່ວນິດນິຮັນ
…

ບັດນີ້ລະຍະຫ່າງລະຫວ່າງເຂົາກັບນາງເຫລືອພຽງສິບແມັດ ແລ້ວກໍຫົກຫ້າສີ່
ແຕ່ນາງກໍຍັງເຫມືອນຈົມຢູ່ໃນມົນຂັງຂອງຫນັງສື ບໍ່ມີວີ່ແວວວ່າຈະເງີຍຫນ້າຂຶ້ນເລີຍ
ມາຮອດນີ້ຄວາມກ້າຂອງອິສຣະກໍຫົດຫາຍໄປຕັ້ງເຄິ່ງ ຫລືວ່ານາງຕັ້ງແກ້ງເຮັດບໍ່ເຫັນ
ບໍ່ວ່າຕີໃກ້ປານນີ້ຍັງບໍ່ຮູ້ສຶກຕົວ ສົງໃສຄໍາເລົ່າລືທີ່ວ່າວຽງປະພາຂີ້ຄຸຍຂນາດ
ຊິມາຖືກກັບເຂົາເຂົ້າແລ້ວ ພາຍໃຕ້ຄວາມລັງເລໃຈທີ່ວ່າຊິກ້າວໄປຫລືຖອຍຫລັງກໍາລັງຕໍ່ສູ້ກັນນັ້ນ
ສາຍຕາຂອງເຂົາກໍບັງເອີນເຫລືອບໄປເຫັນປາກກາກ້ານນຶ່ງຕົກຢູ່ຂ້າງໆນາງ ໄດ້ການລະ
ຕ້ອງເຮັດຕີວ່າເປັນສຸພາບບຸຣຸດໄປເກັບປາກການັ້ນໃຫ້ນາງ

"ຂໍໂທດວຽງປະພາ ປາກກາເຈົ້າຕົກ"
ອິສຣະເວົ້າອອກໄປດ້ວຍນໍ້າສຽງສັ່ນໆພ້ອມກັບເດ່ປາກກາໄປໃຫ້ນາງ
ມືເຂົານັ້ນກໍຮູ້ສຶກວ່າສັ່ນບໍ່ນ້ອຍຫນ້າໄປກ່ວານໍ້າສຽງນັ້ນເລີຍ ວຽງປະພາໃບຫນ້າລຽບສງົບ
ຍື່ນມືອອກໄປຮັບເອົາປາກກາກ້ານນັ້ນແລ້ວກໍກ່າວພຽງສັ້ນໆວ່າ ຂອບໃຈ ເທົ່ານັ້ນເອງ
ຕໍ່ຈາກນັ້ນນາງກໍກົ້ມຫນ້າລົງໃສ່ປຶ້ມຄືເກົ່າ ປະພັນບໍ່ຈັກແນວຊິເຮັດໄດ້ແຕ່ເກົາຫົວຍ້ອກໆ
ຈະນັ່ງກໍບໍ່ກ້ານັ່ງເພາະນາງບໍ່ໄດ້ເຊີນ ຈະໄປກໍບໍ່ກ້າໄປຢ້ານເສັຽເຊີງຊາຍ
ອົດສາມາຮອດທີ່ຮອດຖານແລ້ວ ຍັງບໍ່ໄດ້ເລື້ອງຢູ່ດີ
ຫມູ່ຄູ່ມາເຫັນເຂົ້າກໍຄົງຕ້ອງອາຍຂາຍຫນ້າເຂົາຫມົດ ບໍ່ທັນທີທີ່ອິສຣະຈະຕັດສິນໃຈເຮັດແນວໃດ
ສຽງລະຄັງຕີບອກໂມງຈາກທໍຄອຍຂອງໂຮງຮຽນກໍດັງຂຶ້ນ ໂລ່ງອົກໄປທີ
ບາດນີ້ລະຊິໄດ້ຍ່າງຄຽງຄູ່ໄປນໍາຄົນທີ່ເຂົາຮັກເຂົາຫລົງປອງ ວຽງປະພາພັບປຶ້ມ
ລຸກຂຶ້ນແລ້ວໂດຍບໍ່ເອື້ອນເອີ່ຍຈັກຄໍາ ນາງກໍຍ່າງລິ່ວໆກາຍເຂົາໄປ
ໂດຍທີ່ເຂົາເອງບໍ່ຄິດວ່າຈະໄວປານນີ້ ຈຶ່ງໄດ້ແຕ່ແນມນໍາຫລັງນາງພ້ອມກັບເກົາຫົວຍ້ອກໆ
ເປັນຄັ້ງທີສອງອີກ

IV.

ມື້ນີ້ວຽງປະພາອອກຈາກຫ້ອງຮຽນຊ້າກ່ວາທຸກຄັ້ງ
ກ່ວາໆນາງຈະແວກວ່າຍຜ່ານຜູ່ຄົນຂຶ້ນມາເທິງລົດເມທີ່ນາງເຄີຍໂດຍສານເປັນປະຈໍາໄດ້
ກໍຫລິ້ນເອົານາງເຫື່ອຍ້ອຍຫນ້າຍ້ອຍຫລັງຫມົດ ອາດຈະເປັນຍ້ອນວ່າ ນາງມາຊ້າກ່ວາທຸກມື້
ມື້ນີ້ຈຶ່ງບໍ່ມີທີ່ຫວ່າງເຫລືອໃຫ້ນັ່ງ ທໍາອິດນາງກໍຢືນຢູ່ໃກ້ໆປະຕູທາງຂຶ້ນ
ແຕ່ດ້ວຍວ່າມີຄົນຂຶ້ນມາເພີ່ມເລື້ອຍໆ
ນາງຈຶ່ງຄ່ອຍໆຖືກຂັບເຄື່ອນໃຫ້ເຂົ້າໄປຂ້າງໃນເລິກເຂົ້າໄປອີກ

ແລ້ວນະທີ່ນັ້ນໂດຍບໍ່ທີ່ນາງບໍ່ຄາດຄິດ
ກໍມີສຽງທຸ່ມໆເປັນພາສາທີ່ນາງບໍ່ຈຳເປັນຕ້ອງແປທັກທ້ວງຂຶ້ນຢ່າງຄຸ້ນໆສຽງວ່າ
"ວຽງປະພາ ນັ່ງແທນບ່ອນຂ້ອຍແມ່"
ແລະ ເມື່ອນາງຫລຽວໄປເບິ່ງ ໂອ້ອິສຣະຊາຍຫນຸ່ມຜູ່ມີໃນຕາເສົ້າໆ ແລະ
ທ່າທາງທີ່ເກີ້ເຂີນນັ້ນເອງ

ອິສຣະກຳລັງລຸກຂຶ້ນ ແລະບອກໃຫ້ນາງໄປນັ່ງແທນດ້ວຍສາຍຕາວິງວອນທີ່ສຸດແສນຈະອ່ອນໂຍນ
"ຂອບໃຈຫລາຍໆ ແຕ່ໄດ້ລະ"
ນາງປະຕິເສດແລ້ວກໍຫລຽວຫນີໄປທາງອື່ນ ຫວັງໃຫ້ເຂົານັ່ງລົງຄືນ
ອິສຣະເມື່ອລຸກຂຶ້ນແລ້ວກໍບໍ່ເຄີຍຄິດທີ່ຈະນັ່ງລົງຄືນ ໃນຂະນະທີ່ເຂົາພວມຄິດຈະຫາຄຳເວົ້າ
ມາຊັກຊວນນາງຕໍ່ ກໍມີຊາຍຫນຸ່ມອີກຄົນນຶ່ງນັ່ງແປະລົງແທນບ່ອນເຂົາ
ເຂົາຈຶ່ງໄດ້ແຕ່ຍິ້ມແຫ້ງໆປະສານກັບຮອຍຍິ້ມຂໍໂທດຂອງນາງທີ່ເມື່ອເຫັນວ່າມີຜູ່ອື່ນນັ່ງລົງ
ແທນບ່ອນເຂົາ

ອິສຣະນັ້ນເມື່ອເຫັນຮອຍຍິ້ມອັນສຸດແສນຈະດື່ມດ່ຳຫົວໃຈຂອງວຽງປະພາແລ້ວ
ກໍໄດ້ຂອບຄຸນສວັນທີ່ບັນດານໃຫ້ເຂົາໄດ້ມາພົບນາງອີກຄັ້ງ
ບໍ່ພໍຍັງໄດ້ມີໂອກາດມາຢືນຢູ່ເກືອບວ່າຈະແນບຊິດກັບນາງອີກດ້ວຍ
ແມ້ນວ່າເຂົາບໍ່ອາດສາມາດເອີ່ຍວາຈີໃດອອກມາໄດ້ ສາຍຕາເຂົາກໍເຝົ້າຖນອມຫອມຮັກ
ໂດຍສະເພາະກໍແມ່ນເຮືອນຜົມທີ່ດົກດຳ ແລະ ສ່າຍຍາວລະອຽດລະອ່ອນຂອງນາງນັ້ນ
ນີ້ຫາກວ່າເຂົາແລກປ່ຽນໄດ້ ເຂົາຈະແລກປ່ຽນທຸກສິ່ງຢ່າງແມ້ນກະທັ່ງຊີວິດ
ເພື່ອທີ່ຈະໄດ້ເຝົ້າມອງເຮືອນຜົມທີ່ງາມສລວຍຂອງນາງຢ່າງໃກ້ຊິດເຊັ່ນນີ້

ສ່ວນວຽງປະພາເຖິງຈະຂວາຍເຂີນທີ່ຈະຕ້ອງມາຢືນຢູ່ໃກ້ເຂົາຢ່າງທີ່ບໍ່ເຄີຍໄດ້ຢູ່ໃກ້ຊາຍໃດມາກ່ອນ
ໂດຍສະເພາະກໍແມ່ນຊາຍທີ່ມີທີທ່າວ່າມີໃຈໃຫ້ນາງ
ນາງກໍຮູ້ສຶກວ່ານາງສາມາດໄວ້ໃຈໃນຊາຍຄົນນີ້ໄດ້
ອາດຈະເປັນຍ້ອນວ່າບຸນມີໄດ້ເລົ່າເລື້ອງຂອງເຂົາໃຫ້ນາງຟັງ ຈົນນາງອົດຄິດໄປວ່າ
ນາງຮູ້ເຖິງຊາຍຄົນນີ້ຫລາຍກ່ວາຜູ່ຊາຍຄົນອື່ນໆທີ່ເຂົ້າມາວາຍວຽນນຳຊີວິດຂອງນາງ

ໃນຫ້ວງນຶກຂອງນາງ ຄຳເວົ້າຂອງບຸນມີກ່ຽວກັບເພື່ອນເກົ່າຂອງເຂົາຍັງຄົງກ້ອງກັງວານຢູ່ສເມີ

ບຸນມີເລົ່າວ່າໄດ້ຮູ້ຈັກລິ້ງແກ່ວນກັບອິສຣະມາເປັນເວລາສິບກ່ວາປີຕັ້ງແຕ່ສໄມຢູ່ສູນອົພຍົບຈັງຫວັດນະຄອນພະນົມປະເທດໄທພຸ້ນ ນີ້ຖ້າເວົ້າແບບພໍຫອມປາກາຫອມຄໍແລ້ວ ອິສຣະເປັນຄົນທີ່ພໍ່ແມ່ທຸກຄົນຕ່າງກໍຄົງຫມາຍຫມັ້ນຢາກໃຫ້ລູກຊາຍຂອງຕົນເປັນໄດ້ດັ່ງເຂົາ ດ້ວຍວ່າເຂົານັ້ນເປັນຄົນທີ່ສຸພາບອ່ອນໂຍນ ມີສະຕິປັນຍາ ແລະ ພ້ອມດຽວກັນນັ້ນເຂົາກໍເປັນຄົນທີ່ຊື່ງໄວ້ຊຶ່ງອຸດົມການ ຊຶ່ງຂໍ້ຫລັງນີ້ບຸນມີກໍບໍ່ແນ່ວ່ານີ້ເປັນຄຸນນະລັກສນະທີ່ຫນຸ່ມສາວລຸ້ນໃຫມ່ຄວນຈະມີບໍ່? ມີສິ່ງນຶ່ງທີ່ບຸນມີແນ່ໃຈໃນຕົວເພື່ອນກໍຄືວ່າ ອິສຣະບໍ່ເຄີຍເວົ້າຕົວະຕົ້ມ ການເສາະສແວງຫາສິ່ງທີ່ດີງາມເຮັດໃຫ້ຫນໍເປັນຄົນທີ່ຈິງຈັງຕໍ່ຊີວິດຢູ່ສເມີ ບຸນມີຈື່ໄດ້ວ່າມີຄັ້ງນຶ່ງເພື່ອນໄດ້ບອກເຂົາວ່າ ເຂົາ (ອິສຣະ) ເປັນຫນີ້ຊີວິດຕໍ່ອີກຫລາຍໆຄົນ... ຕໍ່ພໍ່ແມ່ບັງເກີດເກົ້າທີ່ເຝົ້າຖນຸຖນອມລ້ຽງເຂົາຈົນເຕີບໃຫຍ່ ຕໍ່ຄູບາອາຈານທີ່ເຝົ້າສັ່ງສອນຄວາມຮູ້ໃຫ້ ແລະ ຕໍ່ຢ່າງອື່ນອີກທີ່ບຸນມີຟັງແລ້ວກໍບໍ່ຄິດວ່າ ເພື່ອນຂອງຕົນຄົນນີ້ຄົງຈະບໍ່ເຕັມແລ້ວ ດັ່ງນັ້ນໃນບາງຄັ້ງຄາວ ບຸນມີຈຶ່ງຢອກລໍ້ເພື່ອນວ່າ ນີ້ຖ້າອຸດົມການນັ້ນຍິ່ງໃຫຍ່ສໍາຫລັບເຂົາແລ້ວ ເປັນຫຍັງຈຶ່ງເອົາຕົວຫລົບຫນີອອກຈາກບ້ານເກີດເມືອງນອນໄປ? ຊຶ່ງນັ້ນກໍຫມາຍຄວາມວ່າອິສຣະເປັນຄົນແປກເອົາແທ້ໆ ບໍ່ພໍໃນຕອນຢູ່ສູນອົພຍົບນັ້ນ ເຂົາຍັງຝັງຫນ້າຢູ່ກັບຫນັງສືຫນັງຫາໂດຍສະເພາະກໍແມ່ນປຶ້ມເລກແຄນຄຸລັສ (calculus) ທີ່ຍາກແສນຍາກນັ້ນດ້ວຍ ຈະເວົ້າແລ້ວປຶ້ມເລກດັ່ງກ່າວແມ່ນພີ່ນ້ອງຂອງບຸນມີເອງທີ່ຝາກໃຫ້ ເພື່ອຫວັງໃຫ້ເຂົາໄດ້ສຶກສາຮໍ່າຮຽນໄວ້ ແຕ່ເຂົາກັບຄິດວ່າຕົນນັ້ນຍັງມີເວລາຫລາຍທີ່ຈະຮຽນຢູ່ໃນເວລາທີ່ໄປຮອດໄປເຖິງປະເທດທີສາມເຊັ່ນສະຫະລັດອະເມຣິກາແລ້ວ

ເວົ້າແລ້ວມັນກໍມີສິ່ງນຶ່ງອີກທີ່ບຸນມີອິດຊື່ນຊົມໃນຕົວຂອງເພື່ອນບໍ່ໄດ້ ສິ່ງນັ້ນກໍຄືວ່າອິສຣະບໍ່ເປັນຄົນທີ່ເຝົ້າຕາມລ່າຜູ່ຍ່າຜູ່ຍິງດັ່ງທີ່ຊາຍຫນຸ່ມເປັນຈໍານວນບໍ່ຫນ້ອຍມັກເປັນກັນ ບາງທີອາດຈະເປັນຍ້ອນວ່າເຂົາບໍ່ມີເງິນຕິດຖົງຄືຫມູ່ ບາງທີອາດຈະເປັນຍ້ອນວ່າເສື້ອຜ້າຂອງເຂົາມັນເກົ່າ ແລະ ຕາຍສີຫມົດ ຫລືບາງທີອາດຈະເປັນຍ້ອນວ່າເຂົາບໍ່ມີຫົວໃຈໃຫ້ຍິງສາວໃດໆເລີຍກໍເປັນໄດ້ ບໍ່ວ່າຈະເປັນຍ້ອນສິ່ງໃດ ບຸນມີກໍດີໃຈທີ່ບໍ່ຕ້ອງໄດ້ມາແຂ່ງຂັນ ແລະ ຊ່ວງຊີງກັບເພື່ອນໃນດ້ານຄວາມຮັກຈາກຕົວຂອງຍິງສາວ ກໍດັ່ງທີ່ບໍ່ໃຜສາມາດບອກໄດ້ ແວວຕາເສົ້າໆ ແລະ ທ່າທາງທີ່ງຽບຂຶມຂອງເຂົາອາດຈະຊະນະໃຈຍິງສາວໃດນຶ່ງຢ່າງບໍ່ເຄີຍຄິດເຄີຍຝັນມາກ່ອນເລີຍກໍເປັນໄດ້

ຄິດມາຮອດນີ້ ວຽງປະພາກໍອົດອົມຍິ້ມບໍ່ໄດ້
ຢູ່ໃນໂລກນີ້ກໍຍັງມີນໍຜູ່ຊາຍທີ່ບໍ່ຄ່ອຍສົນໃຈເພດກົງກັນຂ້າມເຊັ່ນເຂົາ
ແຕ່ເຖິງຢ່າງໃດກໍດີນາງກໍຍັງຮູ້ສຶກວ່າມັນມີສິ່ງໃດສິ່ງນຶ່ງໃນຕົວເຂົາຊຶ່ງນາງບໍ່ສາມາດອະທິບາຍໄດ້
ເບິ່ງຢ່າງນຶ່ງເຂົາຄືປຶ້ມທີ່ເປີດໄວ້ລໍຖ້າໃຫ້ອ່ານ ແຕ່ຖ້າເບິ່ງອີກຢ່າງນຶ່ງເຂົາຄືມີຄວາມໃນໃຈ
ທີ່ບໍ່ມີໃຜຈະອາດລ່ວງຮູ້ ແລະ ເຂົ້າເຖິງໄດ້ເລີຍ

ກ່ອນຈະລາລັບເຂົ້າບ້ານວັນນັ້ນ ນາງສົ່ງຮອຍຍິ້ມໃຫ້ເຂົາເຫມືອນໆຈະເປັນສັນຍານວ່າ
ຫາກເຂົາຈະມາຫລິ້ນນໍານາງເຖິງບ້ານກໍບໍ່ເປັນຫຍັງ ຍິນດີຕ້ອນຮັບສເມີ
ນັ້ນຄືສິ່ງທີ່ເຂົາສລຸບເອົາເອງຈາກຮອຍຍິ້ມຫວານໆທັມມະດານັ້ນ



V.

ສອງສາມມື້ຕໍ່ມາ ຫິມະລົງເປັນຝຸຍຜົງຂາວຈ່ານໄປທົ່ວທີ່ລານຫນ້າບ້ານຂອງວຽງປະພາ
ມີກອງຫິມະກອງກັນສູງຈົນພຽງຫົວເຂົ່າ
ຈາກອາກາດທີ່ເຢັນພໍສະບາຍມາພົບກັບພາຍຸຫິມະຢ່າງກະທັນຫັນ
ເຮັດໃຫ້ວຽງປະພາເປັນໄຂ້ຫວັດເຖິງກັບບໍ່ໄດ້ໄປໂຮງຮຽນຕັ້ງແຕ່ເຊົ້າມາ
ຍັງບໍ່ເຫັນຫມູ່ເພື່ອນຄົນໃດມາຢ້ຽມນາງ

ບາງທີເຂົາເຈົ້າອາດຈະອອກບ້ານບໍ່ໄດ້ຍ້ອນທີມະລົງຫລາຍກໍບໍ່ຮູ້
ໃນຂະນະທີ່ນາງພວມນອນຫລັ້ນຢູ່ເທິງຕຽງ ຄິດໄປຄິດມາຕາມປະສາຂອງຄົນທີ່ບໍ່ມີວຽກຫຍັງເຮັດ
ແມ່ຂອງນາງກໍຖືຊໍ່ດອກໄມ້ພ້ອມກັບຖົງໃສ່ຫມາກໄມ້ເຂົ້າມາ

"ລູກພາ ມີຄົນເຂົາເອົາອັນນີ້ມາໃຫ້ລູກ ແມ່ບອກໃຫ້ເຂົ້າມາກ່ອນແມ່ະກໍບໍ່ຍອມເຂົ້າມາ
ເບິ່ງຊົງເຂົາເປັນຫມູ່ໃຫມ່ຂອງລູກແມ່ນບໍ່? ແມ່ບໍ່ເຄີຍເຫັນຫນ້າເຂົາມາກ່ອນຈັກເທື່ອ"
"ຜູ້ຊາຍຫລືຜູ້ຍິງແມ່?"
ວຽງປະພາຖາມຂຶ້ນດ້ວຍຄວາມຢາກຮູ້
"ຜູ້ຊາຍບໍ່ເຕັ້ຍບໍ່ໃຫຍ່ ອາຍຸຊົງຊິລຸ້ນລາວຄາວດຽວກັນກັບລູກນີ້ລະ"
ວຽງປະພາທົບທວນເບິ່ງຄໍາເວົ້າຂອງແມ່ຄືນ ຫລືວ່າແມ່ນເຂົາ ເປັນໄປໄດ້ບໍ່?
ເປັນຫຍັງເຂົາຈຶ່ງຮູ້ວ່າເຮົາບໍ່ສະບາຍ ຫລືວ່າເຂົາບໍ່ເຫັນເຮົາໄປໂຮງຮຽນ
ແລ້ວເປັນຫຍັງເຂົາຈຶ່ງເອົາຊໍ່ດອກໄມ້ແລະຫມາກໄມ້ມາໃຫ້ເຮົາ ຫລືວ່າເຂົາຮັກເຮົາ
ເປັນໄປບໍ່ໄດ້ດອກ ເຮົາແລະເຂົາຫາກໍ່ຮູ້ຈັກກັນ ຄັນເຂົາບໍ່ຮັກເຮົາ
ແລ້ວເປັນຫຍັງເຂົາຈຶ່ງມາໃສ່ໃຈເຮົາປານນີ້ ວຽງປະພາຄິດແລ້ວກໍຍິ້ມລະລື້ນຜູ່ດຽວ
"ເອີແມ່ ລາວເມືອດົນແລ້ວບໍ່?"
ນາງຖາມແມ່ພ້ອມກັບເອົາຜ້າຫົ່ມອອກຈາກຕົວ
"ຫາກໍ່ເມືອມື້ກີ້ນີ້ ແລ້ວແມ່ກໍເຂົ້າມາຫາລູກໂລດ"
ຄັນຊັ້ນເຂົາກໍຄົງບໍ່ທັນໄປໄກ ນາງພຶມພໍາຢູ່ຜູ່ດຽວ
ຢ່າງຫ່ວງທັນຄວາມຄິດນາງກໍພາຮ່າງຄີງລະລິ່ວໄປໄຂຜ້າມ່ານກັ້ງປ່ອງຢ້ຽມແກ້ວອອກ
ຫັ້ນເດເຂົາຍັງຢູ່ຫັ້ນ ສາຍຕາຈ້ອງມາທາງເຮືອນເຮົາ ທີມະກໍຈັ່ງແມ່ນຕົກ ເຂົາບໍ່ຫນາວບໍ່?
ເປັນຫຍັງເຂົາຈຶ່ງບໍ່ເຂົ້າມາຫາເຮົາ ບໍ່ຫນ້າເລີຍ ທີມະຕົກຫນັກຈັ່ງຊີ້ກະຍັງມາ
ເບິ່ງແມ່ທີມະຕົກລົງທ່ວມຫົວເຂົ່າເຂົາແລ້ວ ເຂົາຍິ້ມມາໃຫ້ເຮົາ ເຂົາເຫັນເຮົາບໍ່? ບໍ່!
ເຂົາຄົງຈະບໍ່ເຫັນເຮົາ ເຂົາກໍາລັງຫັນຫລັງແລ້ວ ເຂົາໄປແລ້ວ
ໂອ້ອິສຣະມື້ນີ້ເຈົ້າຫນ້າຮັກເຫລືອເກີນ ຂ້ອຍ...

"ລູກພາ ຈື່ໄດ້ບໍ່ວ່າຜູ້ຊາຍຄົນນີ້ແມ່ນໃຜ?"
ແມ່ຂອງນາງຊຶ່ງພວກພັບຜ້າຫົ່ມໃຫ້ລູກສາວຖາມຂຶ້ນ ວຽງປະພາຈຶ່ງໄດ້ສະຕິວ່າ
ນາງເອງລະເມີໄປຫລາຍແລ້ວ
"ລາວຊື່ອິສຣະ ແມ່! ຮຽນໂຮງຮຽນດຽວກັນກັບລູກ"

"ອື່ ອິສຣະບໍ່? ຊື່ແປກນໍ ເບິ່ງຊົງຄືເປັນຄົນດີ ທ່າທາງສຸພາບ
ຕອນແມ່ບອກໃຫ້ລາວເຂົ້າມາໃນເຮືອນ ລາວກະວ່າລາວບໍ່ຢາກລົບກວນລູກ
ຢາກໃຫ້ລູກໄດ້ພັກຜ່ອນຫລາຍໆ ແມ່ວ່າຜູ້ຊາຍດີໆແບບນີ້ຄົບໄປກໍບໍ່ເສັຽຫາຍຫຍັງດອກ"
ແມ່ຂອງນາງເວົ້າແລ້ວກໍເອົາດອກໄມ້ໄປໃສ່ແຈກັນເຖິງຕຽງຫົວບ່ອນຂອງລູກສາວ
ແຕ່ກໍບໍ່ຫມົ້ນຕື່ມແຖມເຖິງອິສຣະອີກວ່າ
"ລາວເປັນຕາຮັກອີຫລີ ຮູ້ຈັກຍໍມືນົບແມ່ອີກດ້ວຍ"

ວຽງປະພາຍິ້ມໄປກັບຄຳຊົມຂອງແມ່ທີ່ມີຕໍ່ອິສຣະ ນາງເອງກໍບໍ່ແມ່ນວ່າ ຈະບໍ່ເຫັນຄວາມດີຂອງເຂົາ
ຕລອດເວລາທີ່ຢູ່ເທິງລົດເມນຳກັນ ເຂົາບໍ່ເຄີຍລ່ວງເກີນນາງຈັກບາດເລີຍ
ທັງທີ່ໂອກາດຈະອຳນວນໃຫ້ໃນຍາມຄົນບຽດສຽດແລະຍາມລົດຢຸດຢ່າງກະທັນຫັນ
ອັນເຮັດໃຫ້ຜູ້ໂດຍສານທີ່ຢືນຕ້ອງເຊໄປມາ ຫາກເປັນຊາຍອື່ນທີ່ນາງເຄີຍພົ້
ບໍ່ຫາກຳໄຣນ້ອຍກໍຕ້ອງຫາກຳໄຣຫລາຍ ແຕ່ນີ້ເຂົາສຸພາບຫລາຍ
ກັ່ນກາງບໍ່ໃຫ້ຊາຍອື່ນໃດເຊມາຖືກນາງໄດ້
ດັ່ງນັ້ນພາບຂອງເຂົາທີ່ສຖິດຢູ່ໃນຫ້ອງນຶກຂອງນາງຈຶ່ງມີແຕ່ຄວາມບໍຣິສຸດຜຸດຜ່ອງ
ຫວານຊື່ນແລະເປັນທີ່ເຄົາລົບບູຊາ ນີ້ນາງຮັກເຂົາແລ້ວບໍ່? ບໍ່! ນາງບໍ່ໄດ້ຮັກເຂົາ
ເລື້ອງຄວາມຮັກເປັນເລື້ອງລະອຽດອ່ອນ ຕ້ອງອາໃສເວລາ ຂະນະນີ້ນາງພຽງແຕ່ຊື່ນຊົມວ່າ
ເຂົາເປັນຄົນດີແລະກໍເທົ່ານັ້ນເອງ ນາງແຍ້ງຕົວເອງຢູ່ໃນໃຈໃນທີ່ສຸດ

VI.

"ລູກພາຊິໄປໂຮງຮຽນບໍ່ມື້ນີ້?"
ແມ່ຂອງວຽງປະພາຖາມຂຶ້ນເມື່ອສັງເກດເຫັນວ່າລູກສາວຂອງຕົນກຳລັງຫອບປື້ມຮຽນເຂົ້າຖົງໄຖ່
"ແມ່ນແລ້ວແມ່ ລູກຮູ້ສຶກດີຂຶ້ນຫລາຍແລ້ວມື້ນີ້
ອີກຢ່າງລູກກໍຂາດໂຮງຮຽນໄປແລ້ວຕັ້ງສອງສາມມື້"
ມັນເປັນທີ່ຮູ້ກັນດີວ່າວຽງປະພາມັກໂຮງຮ່ຳມັກໂຮງຮຽນ
ນາງສາມາດກິນຂອງງ່າຍໆທີ່ມີຂາຍທົ່ວໄປໃນຕອນທ່ຽງພຽງເພື່ອທີ່ຈະໄດ້ມີເວລາຫລາຍຂື້ນທີ່ໂຮງ
ຮຽນຍິ່ງກ່ວາທີ່ຈະກັບເມືອບ້ານຫາກິນເຂົ້າດັ່ງນັກຮຽນຄົນອື່ນທີ່ຢູ່ບໍ່ໃກ້ຈາກໂຮງຮຽນຫລາຍປານໃດ
ນາງສຳນຶກດີວ່າແມ່ຂອງນາງໄດ້ເສັຽສລະທຸກສິ່ງທຸກຢ່າງເພື່ອຄ້ຳຈຸນນາງໃຫ້ໄດ້ເຂົ້າຮ່ຳເຂົ້າຮຽນ
ທັງທີ່ວ່າທາງຄອບຄົວກໍບໍ່ພໍຄ່ອຍພໍ ນາງໃສ່ໃຈສເມີມາວ່າແມ່ຂອງນາງຕ້ອງໄດ້ເຮັດວຽກຫນັກ
ພຽງເພື່ອຈະໄດ້ຫາເຂົ້າປາແລະອາຫານມາໃຫ້ລູກໆໄດ້ຢູ່ໄດ້ກິນຫລັງຈາກພໍ່ຂອງນາງໄດ້ເສັຽຊີວິດ

ໄປແຕ່ຕອນນາງຍັງບໍ່ທັນຂຶ້ນສາວ ບາງທີອາດຈະເປັນຍ້ອນຄວາມຮູ້ບຸນຄຸນນັ້ນ
ນາງຈຶ່ງຕັ້ງປະຕິພານວ່າຕົນຈະຮຽນໃຫ້ເກ່ງທີ່ສຸດ
ນາງຫວັງວ່າຫລັງຈາກທີ່ຈົບໂຮງຮຽນແລະໄດ້ລ້າໄດ້ການແລ້ວ
ນາງຈະບັນເທົາພາລະທີ່ແມ່ຂອງນາງແບກຫາບຕລອດມານັ້ນເປັນສ່ວນຫລາຍ
ຍິ່ງໄປກ່ວານັ້ນນາງຍັງຫວັງວ່າຫາກນາງໄດ້ວຽກງານທີ່ດີສົມກັບທີ່ປຣິນຍາທາງບັນຊີບອກໄວ້
ນາງຈະໃຫ້ແມ່ຂອງນາງມາຢູ່ກັບບ້ານກັບເຮືອນຄືດັ່ງກ່ອນທີ່ພໍ່ຂອງນາງຍັງມີຊີວິດຢູ່
ແຕ່ໃນຂະນະດຽວກັນນາງກໍຕະຫນັກວ່າມັນຄົງຈະຍາກທີ່ຈະຊັກຊວນໃຫ້ແມ່ຂອງນາງເຊົາເຮັດວຽກ
ແລະກັບມາຢູ່ບ້ານລ້າໆ ຍິ່ງໄປກ່ວານັ້ນມັນເປັນທີຂອງນ້ອງຊາຍຂອງນາງທີ່ຈະເຂົ້າຮຽນຕໍ່
ທີ່ມະຫາວິທະຍາໄລ ເລື້ອງເງິນຄຳຄົງຈະເປັນບັນຫາໃຫ້ຕ້ອງພະວົງໄປອີກໃນລະຍະໃດນຶ່ງ

"ລູກຊິກັບມາກິນເຂົ້າຢູ່ເຮືອນຢູ່ຕໍ່ມື້ນີ້?"
ແມ່ຂອງນາງຖາມອອກໄປຕາມປະສາຂອງແມ່ທີ່ອົດເປັນຫ່ວງເລື້ອງການຢູ່ການກິນຂອງລູກບໍ່ໄດ້
"ບໍ່ດອກແມ່ ລູກຍັງມີຫລາຍແນວໃຫ້ຕ້ອງໄດ້ຮຽນສຳຫລັບການສອບເພື່ອປິດທ້າຍຂອງໂຮງຮຽນ"
"ຖ້າເປັນແນວນັ້ນ ກໍເອົາຂອງກິນທີ່ແມ່ເຮັດໄວ້ໃຫ້ນັ້ນໄປນຳກໍແລ້ວກັນ"
ກໍດັ່ງເຊັ່ນເຄີຍແມ່ຂອງນາງເປັນຫ່ວງໃນສຸຂພາບຂອງລູກສາວ
ແມ່ຈຶ່ງຫາເວລາທີ່ບໍ່ຄ່ອຍມີເປັນຂອງຕົນເອງຢູ່ແລ້ວມາເຮັດຢູ່ເຮັດກິນເພື່ອລູກເປັນພິເສດອີກ
"ຂອບໃຈແມ່ ລູກນີ້ຊ່າງເກີດມາບຸນມີອີຫລີ"
ນາງອົດບໍ່ໄດ້ທີ່ຈະຍໍຍົກໃນຄຸນງາມຄວາມດີຂອງແມ່ທີ່ເປັນສະເຫມືອນດັ່ງທຸກສິ່ງທຸກຢ່າງຂອງນາງ
"ອີລູກເວົ້າແນວນັ້ນໄດ້ກໍເພາະບໍ່ທັນມີໃຜຄອບຄອງຫົວໃຈລູກເທື່ອຊື່ໆ"
ໃນຂະນະດຽວກັນແມ່ຂອງນາງກໍອົດທີ່ຈະຢອກລໍ້ລູກສາວຜູ່ເປັນຫົວແກ້ວຫົວແຫວນຂອງຕົນບໍ່ໄດ້
"ມັນບໍ່ມີທາງເປັນໄປໄດ້ດອກແມ່ ລູກນີ້ຮັກແມ່ຜູ່ດຽວ"
ວຽງປະພາເວົ້າອອກໄປເຄິ່ງຢອກເຍົ້າເຄິ່ງຈິງຈັງ ແລະຈາກຄຳເວົ້າດັ່ງກ່າວ
ດວງໃຈຂອງນາງກໍລ່ອງລອຍໄປຫານະທີ່ສຸດແສນຈະໄກ
ເຂົາຈະຄິດເຖິງນາງດັ່ງທີ່ນາງມີຕໍ່ເຂົາຢູ່ບໍ່ນໍ? ມື້ເຊົ້ານີ້ ນາງໄດ້ຮັບກະວີທີ່ບໍ່ບອກເຖິງນາມຜູ່ສົ່ງມາ
ແລະທຸກຄັ້ງທີ່ນາງອ່ານກະວີບົດນັ້ນ ພາບຂອງອິສຣະກໍບັນດົນຂຶ້ນມາ
ແມ່ນເຂົາບໍ່ທີ່ຂຽນເວົ້າວອນອອກມາໃນກະວີທີ່ສຸດແສນຈະປະທັບນີ້?



## ຄະນຶງຫາ

ທະເລຍາມເຊົ້າ
ຄື້ນກະທົບຝັ່ງເປັນລະລອກ
ດວງຕາຂ້ອຍຈ້ອງມອງ
ດວງໃຈຂ້ອຍຄິດເຖິງ

ສາຍລົມຍາມບ່າຍ
ໃບໄມ້ລ່ວງຫລົ່ນເປັນສາຍ
ສາຍຕາຂ້ອຍບັນທຶກ
ດວງໃຈຂ້ອຍຄ່ຳຄວນ

ຫນຸ່ມສາວຍາມແລ
ເດີນຄູ່ຄຽງກັນເປັນທິວແຖວ
ແວວຕາຂ້ອຍສຳຜັດ

ດວງໃຈຂ້ອຍສະອື້ນ

ຢາກຈະບອກ ຢາກຈະກະຊິບ
ດວງໃຈດວງນີ້ໃກ້ຈະເປັນເຖົ່າຖ່ານ

ຢາກຈະເອີ່ຍ ຢາກຈະເວົ້າວອນ
ດວງໃຈດວງນີ້ເຝົ້າຄະນຶງຫາ
ແຕ່ເຈົ້າພຽງຜູ່ດຽວ

ໂອ້ທີ່ຮັກເຈົ້າເດ
ຄະນຶງຫາຂ້ອຍຢູ່ບໍ່?
ຍາມເມື່ອທະເລສາດຊັດ
ຄື້ນກະທົບຝັ່ງເປັນລະລອກ
ດວງໃຈເຈົ້າຄົງຈະຄິດເຖິງແຕ່ສິ່ງທີ່ສວຍງາມ

ຍາມເມື່ອໃບໄມ້ລ່ວງຫລົ່ນເປັນສາຍ
ສາຍຕາເຈົ້າຄົງຈະລື່ນເລີງ
ດວງໃຈເຈົ້າຄົງຈະລ່ອງລອຍໄປໄກ

ຍາມເມື່ອຫນຸ່ມສາວເດີນຄູ່ຄຽງກັນເປັນຄູ່
ແວວຕາເຈົ້າສຳຜັດ
ດວງໃຈເຈົ້າຄົງ...

ຢາກຈະວ່າ
ເຈົ້າຄະນຶງຫາຂ້ອຍ
ແຕ່ກໍບໍ່ກ້າ
ມີແຕ່ໃນຄວາມຝັນເທົ່ານັ້ນ
ທີ່ປອບປໂລມໃຈວ່າ
ເຈົ້າຄະນຶງຫາຂ້ອຍ

ຄະນຶງຫາ

ໂອ້ຄະນຶງຫາ
ດວງໃຈດວງນີ້
ຄືງບໍ່ມີ້ນໄດ້ແຕ່ຄະນຶງຫາເຈົ້າ
ຢູ່ດຽວດາຍ
ຈົນຕລອດຊົ່ວຊີວິດແລ້ຫລືໃດ?

.....

ໃນຂະນະດຽວກັນ
ອິສຣະກໍບໍ່ສາມາດທີ່ຈະສຸ່ມຈິດສຸ່ມໃຈໃສ່ການສອບເສັງປິດໂຮງຮຽນທີ່ຈະມາເຖິງໃນອີກບໍ່ດົນນີ້
ເຂົາຮູ້ແຕ່ວ່າໃນຫ້ວງນຶກຂອງເຂົາມີແຕ່ວຽງປະພາ
ຫລືອາດຈະເປັນຍ້ອນວ່າເຂົາບໍ່ໄດ້ເຫັນນາງຕັ້ງສອງມື້ແລ້ວ ບໍ່! ມັນບໍ່ແມ່ນສອງມື້ຊໍ່າ
ເຂົາແຍ້ງຕົວເອງໃນໃຈຫລັງຈາກທີ່ຫລຽວເບິ່ງເຂັ້ມຂອງໂມງທີ່ປຸ່ງນໄປອີກ
ມັນຫາກໍແມ່ນຜົຊົ່ວໂມງ ຄິດມາເຖິງຕອນນີ້ອິສຣະກໍໄດ້ແຕ່ຖອນລົມຫາຍໃຈຮູດໃຫຍ່ໆ
ນີ້ເຂົາເປັນຫນັກຈົນເຖິງຂນາດນີ້ບໍ່?
ເຂົາບອກຕົນເອງວ່າເຫດທີ່ເຂົາຫນີອອກຈາກບ່ອນຝັງສາຍແຮ່ບ່ອນສາຍບືມາກໍດ້ວຍຈຸດປະສົງອັນ
ດຽວ ຊຶ່ງນັ້ນກໍຄືເພື່ອທີ່ຈະໄດ້ຮຽນຕໍ່ໃຫ້ສູງທີ່ສຸດເທົ່າທີ່ພູມປັນຍາຂອງຕົນຈະໃຫ້
ຕັ້ງແຕ່ແຮກເຣີ້ມທີ່ມາຮອດອະເມຣິກາມື້ທໍາອິດພຸ້ນ ເຂົາອ່ານປື້ມຫົວແລ້ວຫົວເຫລົ່າຈົນວ່າ
ເຈົ້າຫນ້າທີ່ຫ້ອງສມຸດຂອງເມືອງແລະຕໍ່ມາກໍແມ່ນເຈົ້າຫນ້າທີ່ຫ້ອງສມຸດຂອງໂຮງຮຽນຈື່ຈໍາຮອດຊື່ທີ່
ບໍ່ຄຸ້ນຫູຂອງເຂົາໄດ້ ທັງນັ້ນທັງນີ້ກໍແມ່ນວ່າເຂົາມັກຈະເປັນຜູ່ທໍາອິດ
ທີ່ເຂົ້າຫ້ອງສມຸດແລະກໍເປັນຜູ່ສຸດທ້າຍທີ່ອອກຈາກຫັ້ນ
ເຂົາຕັ້ງໃຈວ່າຈະອ່ານປື້ມທັງຫມົດເພື່ອສນອງຕອບຄວາມກະຫາຍໃນວິຊາຄວາມຮູ້
ຍິ່ງໄປກ່ວານັ້ນເຂົາຍັງຕະຫນັກວ່າໂດຍຜ່ານການສຶກສາເທົ່ານັ້ນເຂົາຈຶ່ງຈະສາມາດຕອບແທນ
ບຸນຄຸນແກ່ທຸກຄົນທີ່ເຮັດໃຫ້ຊີວິດຂອງເຂົານັ້ນມີຄຸນຄ່າຂຶ້ນມາໄດ້
ເຫດທີ່ເຂົາຄິດເຊັ່ນນີ້ກໍເພາະເຂົາເປັນເດັກກໍ່າພ້າຕ້ອງໄດ້ຫາເສກຫາເຫລືອຈາກກົ້ນບາດຂອງວັດ
ຈົນກ່ວາຈະເຕີບໃຫຍ່ຂຶ້ນມາເປັນຜູ່ເປັນຄົນ
ການສອບເສັງທີ່ດີເລີດແລະການຮຽນຈົບດ້ວຍກຽດນິຍົມເທົ່ານັ້ນຈະເປັນເຄື່ອງຫມາຍວ່າ
ເຂົານັ້ນຍັງບໍ່ລືມບຸນຄຸນຕໍ່ຜູ່ມີພະຄຸນທັງຫລາຍ ແລະດ້ວຍການຕັ້ງຈິດຢ່າງແນ່ວແນ່ດັ່ງກ່າວ
ອິສຣະກໍຕັ້ງຫນ້າເຂົ້າຫາປື້ມທີ່ວາງໄວ້ຕໍ່ຫນ້າຕໍ່ໄປ
ແລະຈະເອົາຕົວອອກຈາກຫ້ອງສມຸດກໍຕໍ່ເມື່ອເຂົາເຂົ້າໃຈໃນຕໍາຣາຮຽນທັງຫມົດເທົ່ານັ້ນ

"ເຮ! ອິສຣະ ໂຕບໍ່ໄປຫາພວກຣິຄລຸດຕິງ
(ພວກທີ່ມາຊອກຫາຄົນເຂົ້າເຮັດວຽກຢູ່ບໍຣິສັດຂອງເຂົາເຈົ້າ) ບໍ່ມື້ນີ້?
ເຮົາໄດ້ຍິນວ່າມີພວກບໍຣິສັດຊື່ສຽງດັງໆມາກັນເປັນແຖວ"
ບຸນມີຜູ່ຊຶ່ງຫາກໍ່ຍອດຕົວເຂົ້າມາໃນຫ້ອງສມຸດຖາມເພື່ອນຮັກຂຶ້ນມາໃນທັນໃດ
"ໃຫ້ໂຕໄປສະ ເຮົາໄປບໍ່ໄດ້ດອກມື້ນີ້ເພາະຍັງມີຫລາຍແນວໃຫ້ຕ້ອງໄດ້ກຽມສຳຫລັບໄຟນົງ (final ການສອບເສັງປິດໂຮງຮຽນ) ທີ່ຈະມາເຖິງນີ້" ອິສຣະກ່າວຂຶ້ນໂດຍບໍ່ຫລຽວມາທາງເພື່ອນ
ເຂົາຮູ້ດີວ່າຖ້າຫລຽວເບິ່ງຫນ້າເພື່ອນ
ເຮັດແນວໃດເຂົາກໍຄົງບໍ່ສາມາດທີ່ປະຕິເສດຄຳຊັກຊວນໃດໆຂອງເພື່ອນໄດ້
"ໂອເຄ ບໍ່ໄປກໍບໍ່ໄປ ແຕ່ຢ່າລືມມາຕໍ່ວ່າໃນພາຍຫລັງເດີວ່າເຮົາບໍ່ບອກໃຫ້ຮູ້ກ່ອນ"
ບຸນມີເວົ້າໃຫ້ເພື່ອນເປັນເຊີງກວນໆແລ້ວກໍເອົາຕົວຫາຍຫວັບອອກຈາກຫ້ອງສມຸດໄປໄວວິບວັບເທົ່າກັບເວລາທີ່ເຂົາໂຜ່ຫນ້າເຂົ້າມາ

ມາບັດນີ້ ຫ້ອງສມຸດຂອງໂຮງຮຽນກໍຄືຈັ່ງວ່າງຽບສງັດເປັນວັງເວັງຢ່າງໃດຢ່າງນຶ່ງ
ຕັ້ງແຕ່ບຸນມີຫາຍຫນ້າໄປຊົ່ວໂມງກ່ວາໆ ນັກຮຽນທີ່ພາກັນມານັ່ງກັນອ້ອມໆຂ້າງເຂົາຕາມໂຕະຕັ່ງທີ່ລຽນລາຍຢູ່ນັ້ນຕ່າງກໍທະຍອຍກັນອອກໄປເປັນສ່ວນຫລາຍ ໃນຕອນທຳອິດນັ້ນ
ເຂົາກໍສະອອນໃນຄວາມມິດງຽບເພາະມັນເຮັດໃຫ້ເຂົາສາມາດສຸ່ມຈິດສຸ່ມໃຈໄດ້ຫລາຍຂຶ້ນກ່ວາເກົ່າ
ແຕ່ຕໍ່ມາເຂົາກໍອົດທີ່ຈະເຝົ້າວິງວອນຢູ່ໃນໃຈບໍ່ໄດ້ວ່າ
ຫາກມີໃຜຄົນນຶ່ງທີ່ມີຜົມຍາວສະລວຍແລະນໍ້າສຽງທີ່ຫວານຈັບໃຈມາຢູ່ກັບເຂົາໃນທີ່ນີ້
ຄວາມວິເວກວັງເວງນີ້ກໍຄົງຈະມີຄວາມຫມາຍຂຶ້ນກ່ວາເກົ່າ
ໃຜຄົນນັ້ນແມ້ນແຕ່ນາມຂອງນາງກໍຊົງໄວ້ຊຶ່ງຄວາມສັກສິດທີ່ເຂົາເອງບໍ່ອາດເອີ່ຍຂຶ້ນມາຢ່າງພອຍໆໄດ້ ແລະດ້ວຍຄວາມຄິດຍັງຢູ່ຫ້ວງກະມົນນັ້ນ ອິສຣະກັບຮູ້ສຶກແປກໆວ່າ
ເຈົ້າຂອງນາມນັ້ນມາປະກົດຕົວທີ່ຫ້ອງສມຸດນີ້ແລ້ວ
ນໍ້າຫອມທີ່ນາງໃສ່ເປັນປະຈຳຈົນປາຍດັງຂອງເຂົາຈື່ຈຳໄດ້ເປັນພິເສດແລະທີ່ເຂົາຢາກຈະຢູ່ເຊີຍຊິດນັ້ນລ້ວນບອກຢໍ້າຄວາມສຳນຶກເຂົາວ່າ ຈະຕ້ອງເປັນນາງຢ່າງແນ່ນອນ ນີ້ມັນເປັນຈິງແທ້ບໍ່?
ຫລືວ່າປະສາດມັນຕັ້ງມາຫລອກຫລອນຕົວເຂົາຊື່ໆ? ແລະຫາກນີ້ເປັນພຽງພາບຫລອກຫລອນ
ເຂົາກໍຍັງຄົງຈະທີ່ຈະຖນອມຫອມຮັກ ເຂົາຢາກຈະຢູ່ໃນສະພາບດັ່ງກ່າວຈົນຕາບເທົ່າໃດໆ...

"ສະບາຍດີອິສຣະ ບ່ອນນີ້ມີໃຜຈ່ອງແລ້ວບໍ່?"
ນໍ້າສຽງທີ່ຄຸ້ນໆຫູດັງຂຶ້ນທາງຫນ້າບໍ່ໄກຈາກເຂົາເທົ່າໃດດັ່ງຂຶ້ນ
ດ້ວຍວ່າບໍ່ຄິດວ່າຄວາມຈິງຈະເປັນດັ່ງຄວາມຄິດຝັນ ອິສຣະເຖິງກັບຍິ້ມແປ້ນຂຶ້ນມາໃນທັນໃດ

"ບໍ່ ວຽງປະພາ" ອິສຣະໜ້າແດງເມື່ອເຫັນເຈົ້າຂອງນໍ້າສຽງນັ້ນຢ່າງເຕັມຕາແລະກໍຢ່າງໃກ້ໆ
ເຫດທີ່ໜ້າຂອງເຂົາແດງຂຶ້ນມາຢ່າງກະທັນຫັນກໍເພາະໃນແວບນຶ່ງຂອງຄວາມຄິດ
ເຂົາຢາກຈະເອົາເຈົ້າຂອງນໍ້າສຽງອັນຫວານຕຣຶງໃຈນີ້ເຂົ້າມາແນບອົກ
ແລະຈູມພິດເບົາໆລົງເທິງຮີມຜີປາກທີ່ລະມຸນລະໄມນັ້ນເປັນເຄົ້າ

"ຂ້ອຍບໍ່ລົບກວນເຈົ້າຕີ່ ທຳອິດທັ້ນຂ້ອຍກໍຄິດວ່າຊິໄປຫານັ່ງຢູ່ບ່ອນໃດບ່ອນນຶ່ງໂດຍບໍ່ໃຫ້ເຈົ້າເຫັນ
ແຕ່ມາຄິດຢ່າງນຶ່ງຖ້າເຮັດແນວນັ້ນມັນກໍຄືຊິໂພດເກີນໄປໃນເມື່ອເຫັນຄົນທີ່ຮູ້ຈັກກັນແລ້ວ
ກໍບໍ່ທັກທາຍກັນກ່ອນ" ວຽງປະພາໃຫ້ເຫດຜົນຂອງນາງຊຶ່ງເວົ້າອອກໄປແລ້ວກໍຮູ້ສຶກແປກໆ ອຸ່ຍ!
ເປັນຫຍັງຕ້ອງໃຫ້ເຫດຜົນກັບເຂົາອີກ ຕໍ່ຜູ້ອື່ນຄືບໍ່ເຫັນວ່າແນວນີ້ຈັກເທື່ອ
"ດີໃຈຫລາຍທີ່ເຈົ້າເຮັດແນວນັ້ນ"
ອິສຣະເກືອບເວົ້າອອກໄປວ່າເຂົາດີໃຈຫລາຍທີ່ວຽງປະພາຍັງຄິດຮອດເຂົາຢູ່
ແຕ່ໃນຂະນະດຽວກັນເຂົາກໍຄິດໄລ່ງອີກໄປວ່າ
ດີແລ້ວທີ່ບໍ່ເວົ້າອອກໄປແນວນັ້ນເພາະເຂົາເອງກໍບໍ່ຕ້ອງການທີ່ຈະເຜີຍຄວາມໃນໃຈຫລາຍເກີນກ່ວາ
ທີ່ຈຳເປັນ ເຂົານັ້ນຕະໜັກໃນໃຈສເມີມາວ່າ ນາງຊ່າງງົດງາມດັ່ງນາງຟ້າ
ແລະກໍສຸດແສນທີ່ຈະດີເລີດລໍ້າເກີນກ່ວາທີ່ນາງຈະມີເວລາມາຄິດເຖິງເຂົາໄດ້
ເຂົາຜູ້ຊຶ່ງບໍ່ມີຫົວນອນປາຍເທົ້າ ບໍ່ຫນໍ່າຍັງເປັນຄົນທີ່ສຸດແສນຈະໜ້າເບື່ອໜ່າຍອີກ

ທັນທີທີ່ວຽງປະພາຫຍັບຕົວລົງນັ່ງຕໍ່ໜ້າເຂົາ ນາງກໍເຂົ້າເຖິງປຶ້ມເຖິງສໍຕາມແບບສະບັບຂອງນາງ
ມັນເປັນໜ້າຂົບຂັນທີ່ວ່າ
ທັງສອງຕ່າງກໍລັກແນມເບິ່ງກັນຫລາຍເທົ່າກັບທີ່ໃຊ້ເວລາເບິ່ງຕົວໜັງສືໃນປຶ້ມ
ເປັນທີ່ແນ່ນອນວ່າອິສຣະນັ້ນລັກເບິ່ງນາງເທົ່າທີ່ໂອກາດຈະອຳນວຍໃຫ້
ແຕ່ດ້ວຍວ່າເປັນຄົນຂີ້ອາຍໂດຍທັມມະຊາດຢູ່ແລ້ວ ເຂົາຈຶ່ງຮູ້ສຶກວາດຫວັ່ນທີ່ສາຍຕາຂອງເຂົາ
ຈະໄປເຈີະຕ້ອງກັບສາຍຕາຂອງນາງຢ່າງບໍ່ໄດ້ຮັບອະນຸຍາດມາກ່ອນ
ວຽງປະພາເອງມີຫລາຍເທື່ອກໍຕ້ອງເຮັດຕີຕາງວ່ານາງບໍ່ເຫັນການລັກໆມອງໆຂອງເຂົາ
ທີ່ມີຕໍ່ນາງນັ້ນເລີຍ ເຫດການເປັນແນວນີ້ເປັນໄປຊົ່ວລະຍະໃດນຶ່ງຈົນວ່າ...

"ຫລີ້ນລັກແນມເບິ່ງກັນຢູ່ຫັ້ນລະ" ສຽງອັນດັງກັງວານຂອງບຸນມີສອດຂຶ້ນເມື່ອທັນສັງເກດເຫັນວ່າ
ແມ່ນຫຍັງເປັນແມ່ນຫຍັງມາພໍສົມຄວນ
"ເປັນແນວໃດເລື້ອງຣິຄຣຸດຕິງ (recruiting) ນັ້ນ ບຸນ? " ອິສຣະປ່ຽນຫົວຂໍ້ສົນທະນາໃນທັນໃດ
"ຢ່າຫວັງວ່າເຮົາຊິຕົກກົນຂອງໂຕງ່າຍໆ" ບຸນມີຍັງຄົງຢືນຢັນທີ່ຈະເອົາຄຳຕອບໃຫ້ໄດ້

"ຂໍໂທດເດີ ຂ້ອຍຊິຕ້ອງໄປຫ້ອງຮຽນດຽວນີ້ແຫລະ"
ວຽງປະພາຢືນຂຶ້ນອັນເຮັດໃຫ້ເຫັນຫນ້າແດງເພາະຄວາມເຂີນອາຍຂອງນາງ
ທີ່ຕ້ອງມາຖືກຈັບໄດ້ເຂົ້າຢ່າງເຕັມຕາ
ນາງກຸລີກຸຈໍຫອບຕົວອອກຈາກຫ້ອງສມຸດນັ້ນໄປໄວເທົ່າທີ່ບາດກ້າວຂອງນາງຈະອະນຸຍາດໃຫ້ໄດ້

"ຕ້ອງຂໍໂທດໂຕຫລາຍໆ ເຮົາບໍ່ໄດ້ມີເຈຕນາແນວນັ້ນອີຫລີ"
ບຸນມີຮູ້ສຶກເສັຽໃຈທີ່ຕ້ອງມາເຮັດໃຫ້ວຽງປະພາຕອ້ງຫນີຈາກອິສຣະຢ່າງປຸບປັ່ບ

"ບໍ່ຕ້ອງເປັນຫ່ວງ ເຮົາກະຊິໄປຫ້ອງຮຽນຄືກັນ"
ອິສຣະກໍຫລີ້ນລູກໄມ້ຫາເຫດຜົນທີ່ຈະໄປຈາກເພື່ອນທີ່ປາກໂປ່ງຄົນນີ້ຄືກັນ
"ໂອເຄ ຮັບຮອງວ່າແຕ່ນີ້ຕໍ່ໄປ ຊິລະວັງປາກລະວັງຄຳກ່ວານີ້ອີກ"
ບຸນມີຕັ້ງໃຈວ່າຊິພະຍາຍາມຢ່າງສຸດຂີດທີ່ຈະບໍ່ເຮັດໃຫ້ອິສຣະຜິດໃຈອີກໂດຍສະເພາະກໍແມ່ນເລື້ອງ
ຂອງວຽງປະພາທີ່ເຂົາຮູ້ແນ່ແກ່ໃຈວ່າ ທັງສອງຄົນນີ້ຕ່າງກໍມີຫຍັງຢູ່ເລິກໆໃຫ້ແກ່ກັນແລະກັນ
ອິສຣະເອງບໍ່ໄດ້ຫົວຊານຳຄຳເວົ້າຂອງເພື່ອນ ແຕ່ກັບແນມນຳຫລັງວຽງປະພາຈົນສຸດສາຍຕາ
ເທົ່າທີ່ປະຕູປ່ອງຢ້ຽມແກ້ວຂອງຫ້ອງສມຸດຈະອະນຸຍາດໃຫ້ເຫັນໄດ້
ກ່ອນທີ່ເຂົາເອງຈະອອກໄປຈາກຫ້ອງສມຸດນັ້ນຄືກັນ

VII.



ມະຫາວິທຍາໄລໃນມື້ນີ້ມີຄວາມຄຶກຄື້ນຕ່າງຈາກທີ່ເຄີຍເປັນມາເພາະມັນແມ່ນມື້ຈົບປີຮຽນແລະທີ່ສຳ
ຄັນກໍແມ່ນວ່າມັນເປັນມື້ທີ່ໃຫ້ປະກາດສະນີຍະບັດແກ່ນັກຮຽນທີ່ຮຽນຈົບຊັ້ນ
ດັ່ງນັ້ນມັນຈຶ່ງບໍ່ແປກທີ່ວ່າ ບໍ່ວ່າທຸກຈອກທຸກແຈໃດ ກໍເຫັນແຕ່ນັກຮຽນພ້ອມດ້ວຍຄອບຄົວ
ແລະຍາດມິດສະຫາຍທີ່ຕ່າງກໍພາກັນຈັບຈຸກັນຖ່າຍຮູບ ຢູ່ກາງເດີນຫຍ້າທີ່ຂຽວອ່ອນ
ຫລືບໍ່ຊັ້ນກໍຟ້າວພາກັນໄປຫາບ່ອນທີ່ຈະທຳພິທີມອບປະກາດສະນີຍະບັດນັ້ນ ກໍຄືດັ່ງທຸກປີ

ປີນີ້ພິທີການແມ່ນຈະໄດ້ຖືກຈັດຂຶ້ນຢູ່ໃກ້ເດີ່ນກິລາ football
ເດີ່ນດັ່ງກ່າວມີລັກສະນະຄືເດີ່ນກິລາຂອງກຣີກສໄມໂບຮານໂດຍທົ່ວໆໄປ  ຄືວ່າມັນມີຮູບວົງມົນ

ຕັ້ງແຕ່ຕອນເຊົ້າມາ  ນັກຮຽນທີ່ຮຽນຈົບຊັ້ນຢູ່ໃນຊຸດເສື້ອຜ້າກວມຕົວສີດຳລວງ
ອັນເປັນສັນຍາລັກຂອງນັກຮຽນທີ່ຮຽນຈົບມະຫາວິທະຍາໄລມາດັ່ງໃນສໄມເກົ່າກ່ອນ
ຕ່າງກໍພາກັນທະຍອຍກັນເຂົ້າໄປຫາທີ່ນັ່ງທີ່ຈັດໄວ້ຂອງແຕ່ລະຂະແນງວິຊາ
ອິສຣະເອງກໍມາແຕ່ເຊົ້າຄືກັນ  ເກືອບວ່າຈະວ່າມາແຕ່ຕົວກໍແມ່ນ
ເພາະເຂົາເອງບໍ່ມີພໍ່ບໍ່ມີແມ່ບໍ່ມີອ້າຍບໍ່ມີນ້ອງແລະແມ້ນແຕ່ມິດສະຫາຍທີ່ໃກ້ຊິດມານຳ
ບາງຄັ້ງຄາວເມື່ອຫລຽວເບິ່ງລອບໆຕົວແລະເຫັນນັກຮຽນຜູ່ອື່ນໆຫ້ອມລ້ອມໄປດ້ວຍໃບຫນ້າ
ທີ່ເບີກບານຂອງຄອບຄົວເຂົາເຈົ້າ  ອິສຣະກໍອົດທີ່ຈະຄິດເຖີງສະພາບຂອງຕົນເອງບໍ່ໄດ້
ຖ້າຫາກແມ່ນວ່າຜູ່ບັງເກີດເກົ້າຂອງເຂົາຍັງມີຊີວິດຢູ່
ເຂົາຄົງຈະມີທ່ານທັງສອງທີ່ຈະຮ່ວມພາກພູມໃຈໃນຄວາມສຳເລັດທາງດ້ານການສຶກສານີ້

ອິສຣະພະຍາຍາມຢ່າງສຸດຂີດທີ່ຈະສະກັດກັ້ນນ້ຳຕາທີ່ກ່ຳກັນຂຶ້ນທີ່ເບົ້າບໍ່ໃຫ້ໄຫລລົງມາ
ເຂົາຍັງຈື່ຈຳໄດ້ເຖີງຍາດຕິພີ່ນ້ອງແລະຄູບາອາຈານທີ່ຈາກມາ
ທ່ານເຫລົ່ານັ້ນຕ່າງກໍເປັນພະລັງແຮງທີ່ຊ່ອຍຊູເຂົາໃຫ້ສູ້ຊົນກັບຊີວິດ
ແລະກໍຫວັງຢ່າງຍິ່ງວ່າມື້ໃດມື້ນຶ່ງເຂົາຈະກັບຄືນມາສ້າງບ້ານແປງເມືອງສົມກັບຄວາມມຸ່ງຫວັງຕັ້ງໃຈ
ທີ່ທຸກໆຄົນຕ່າງມີໄວ້ໃນຕົວເຂົາ

ຈາກຈົດຫມາຍແລະຂ່າວຄາວໃນບາງຄັ້ງຈາກເມືອງລາວ  ອິສຣະລ້ວນຊຶ້ງແກ່ໃຈວ່າ
ທຸກຄົນຕ້ອງລຳບາກຍາກແຄ້ນພຽງເພື່ອຈະໄດ້ຢູ່ກິນໄປວັນໆ  ແຕ່ເຖີງຈະເປັນຢ່າງໃດ
ທຸກຄົນກໍພູມໃຈທີ່ໄດ້ປະກອບສ່ວນສ້າງບ້ານແປງເມືອງທີ່ຕົນຮັກເປັນຊີວິດຈິດໃຈ
ຜູ່ຄົນທີ່ຈາກມາເຫລົ່ານີ້ບໍ່ໄດ້ຄິດທີ່ຈະມີບ້ານເມືອງອື່ນນອກຈາກຜືນແຜ່ນດິນລາວນີ້
ແລະເຫນືອສິ່ງອື່ນໃດຫມົດທຸກຄົນກໍຕ່າງພ້ອມທີ່ຈະຢູ່ແລະຕາຍຢ່າງຄົນລາວທີ່ທໍຣະນົງໃນມາຕຸພູມ
ຂອງຕົນ  ຈາກຈົດຫມາຍສະບັບນຶ່ງ
ເຂົາເຫລົ່ານັ້ນຕ່າງກໍບອກເຕືອນໃຫ້ເຂົາບໍ່ຫລົງລືມແຜ່ນດິນທີ່ທຸກຈົນນັ້ນ
ລຸງຂອງເຂົາຄົນນຶ່ງຍັງກຳຊັບອີກວ່າ  ເຫດທີ່ພໍ່ແມ່ຂອງເຂົາຕັ້ງຊື່ອິສຣະໃຫ້ເຂົານັ້ນ
ກໍຫວັງວ່າເຂົາຈະນຳຮອຍທາງຂອງຂະບວນການລາວອິສຣະໃນເມື່ອກ່ອນນັ້ນໃຫ້ຈົນເຖີງທີ່ສຸດ
ແມ້ນກະທັ່ງນາມສະກຸນຂອງເຂົາກໍບອກແຈ້ງວ່າ  ເຊື້ອຕະກຸນຂອງເຂົານັ້ນແມ່ນໃຜກັນແທ້

ບາງຄັ້ງຄາວ ອິສຣະກໍມີແນວໂນ້ມທີ່ຈະກັບຄືນໄປຫາດິນແດນທີ່ຈາກມາ ຈາກວິຊາວິສະວະກັມ
ເຂົາຄົງຈະສາມາດທຳຕົວໃຫ້ເປັນປໂຍດແກ່ຊາດບ້ານເມືອງໄດ້
ເຂົາເອງໂດຍສັດຈິງແລ້ວກໍບໍ່ໄດ້ສົນໃຈກັບເລື້ອງເງິນຄຳດັ່ງທີ່ວິຊາຄວາມຮູ້ນີ້ຈະມີໃຫ້ໄດ້
ເຂົາຄິດສເມີມາວ່າ ເຂົາເກີດມາເປັນຄົນທີ່ທຸກຈົນ
ແລະເຕີບໃຫຍ່ມາທ່າມກາງຄວາມຂັດສົນແລະຂາດແຄນ
ດັ່ງນັ້ນມັນຈຶ່ງບໍ່ມີຫຍັງຕ່າງສຳຫລັບເຂົາທີ່ຈະທົນຢູ່ກັບສິ່ງດັ່ງກ່າວຈົນຕລອດຊົ່ວຊີວິດນີ້
ວິຊາຄວາມຮູ້ແລະການເຂົ້າເຖິງຄວາມຈິງຂອງຊີວິດຄືສິ່ງທີ່ເຂົາມຸ່ງຫມາຍຕໍ່ ຍິ່ງໄປກ່ວານັ້ນ
ເຂົາຕ້ອງການທີ່ຈະຢືນຢັດໃນອຸດົມການທີ່ບັນພະບຸຣຸດໄດ້ວາງໄວ້ຈົນກ່ວາຊີວິດນີ້ຈະເຫລືອໄວ້
ພຽງເຖົ່າຖ່ານ

ແຕ່ເຖິງຢ່າງໃດກໍດີ ໃນຂະນະດຽວກັນນັ້ນ
ເຂົາກໍຕ້ອງການໃຜຄົນນຶ່ງທີ່ເຂົາຮັກມາຮ່ວມເປັນກຳລັງແຮງໃນຈິນຕະນາການທີ່ວາດໄວ້ນັ້ນ
ແລະໃຜຄົນນັ້ນກໍຄືວຽງປະພານັ້ນເອງ
ຈາກເລື້ອງລາວເລັກໆນ້ອຍໆທີ່ເຂົາໄດ້ພໍຮຽນຮູ້ກ່ຽວກັບຄອບຄົວຂອງນາງ
ເຂົາຮູ້ວ່າບໍ່ມີໃຜໃນຄອບຄົວຂອງນາງເຫລືອຄ້າງຢູ່ດິນແດນທີ່ຈາກມາ
ການສູນເສັຽບິດາຈາກການໄປສັມມະນາຢ່າງບໍ່ມີວັນກັບຄືນມາຄົງຈະເປັນພາບທີ່ສະເທືອນໃຈ
ເຮັດໃຫ້ນາງບໍ່ຢາກກັບຄືນຫາບ້ານເກົ່າເມືອງເດີມອີກ ຍິ່ງໄປກ່ວານັ້ນກໍແມ່ນວ່າ
ນາງມີໂລກທັງຫນ່ວຍໂລກພ້ອມທີ່ຈະບຳຣຸງບຳເຣີນາງ
ດ້ວຍດີກຣີສມຸດບັນຊີແລະບຸກຄະຣິກທີ່ຫນ້າຮັກຂອງນາງ
ຄອບຄົວໃດກໍຄົງພ້ອມທີ່ຈະອ້າແຂນຕ້ອນຮັບນາງເຂົ້າເປັນລູກໄພ້
ແລ້ວເຂົາເດມີຫຍັງແດ່ທີ່ຈະມອບໃຫ້ນາງໄດ້? ອຸດົມການທີ່ກິນບໍ່ໄດ້ນັ້ນບໍ່?
ນັ້ນມັນເປັນການເຫັນແກ່ຕົວຈົນເກີນໄປຊຶ່ງຄົນຢ່າງເຂົາບໍ່ອາດສາມາດທີ່ຈະລົດຕົວລົງຕ່ຳ
ຈົນເຖິງຂັ້ນນັ້ນໄດ້ ນີ້ຖ້າເຂົາຈະເອົາຍິງໃດມາເປັນຄູ່ຄອງຂອງຊີວິດ
ເຂົາກໍຕ້ອງການໃຫ້ນາງຄົນນັ້ນມີຄວາມສຸກ ແລະຖ້າຫາກນັ້ນເປັນໄປບໍ່ໄດ້
ເຂົາກໍພ້ອມທີ່ຈະເສັຽສລະໃຫ້ນາງໄດ້ເດີນໄປຕາມທາງຂອງນາງທີ່ດີກ່ວານີ້

ອີກຢ່າງກໍແມ່ນວ່າ ຊີວິດເຂົານັ້ນກໍເປັນຊີວິດທີ່ຂາດຄວາມສຸກມາແຕ່ໃດໆ
ເຂົາຈຶ່ງທົນບໍ່ໄດ້ທີ່ລາກແກ່ຄົນທີ່ເຂົາຮັກເປັນຊີວິດຈິດໃຈໃຫ້ຕ້ອງມາຢູ່ໃນສະພາບເຊັ່ນເຂົາໄດ້
ດ້ວຍວ່າອະນາຄົດຂອງເຂົານັ້ນຍັງເປັນທີ່ບໍ່ຈະແຈ້ງ
ອິສຣະຈຶ່ງຕັດໃຈວ່າທາງທີ່ດີທີ່ສຸດກໍຄືເຂົາຈະບໍ່ກ້າວເກີນໄປກ່ວາຄວາມສັມພັນຖານ

ດັ່ງທີ່ເຄີຍເປັນມາ ນັ້ນກໍຄືເກັບຄວາມຮັກນັ້ນຊ່ອນເຮັ້ນໄວ້ແຕ່ໃນໃຈຜູ້ດຽວ ເຂົາຮູ້ແກ່ໃຈວ່າການຕັດສິນໃຈນີ້ມັນຊ່າງສຸດແສນທີ່ຈະທໍຣະມານຕົວເຂົາ ແຕ່ມັນກໍຈໍາເປັນເພາະນີ້ເປັນວິທີດຽວທີ່ເຂົາຈະບໍ່ເຮັດໃຫ້ນໍ້າຕາຂອງຄົນທີ່ເຂົາຮັກຕ້ອງໄຫລອອກມາ ຍ້ອນຕົວເຂົາໄດ້ ນີ້ຫາກແມ່ນພຽງວ່າຫົວໃຈຂອງເຂົາເຮັດໄດ້ຕາມຕ້ອງການ ເຂົາຈະຕິດຕາມນາງໄປທຸກຫົນແຫ່ງ ເພາະຮອຍຍີ້ມທີ່ຫວານຊຶ້ງ ເພາະດວງຕາທີ່ເປັນປະກາຍ ເພາະນໍ້າສຽງທີ່ຊວນໃຫ້ຫວາບຫວາມ ເພາະເຮືອນຜົມທີ່ດໍາງາມສລວຍ ... ລ້ວນແລ້ວແຕ່ເປັນທຸກສິ່ງທີ່ຊົ່ວຊີວິດນີ້ເຂົາຄົງຈະຂາດບໍ່ໄດ້ "ໂອ້ວຽງປະພາ ຂ້ອຍຮັກເຈົ້າຫນັກເຖີງຂນາດນີ້ແລ້ວຫລືໃດ? "

"ອິສຣະ ເຈົ້າກໍຊ່າງມາລີ້ຢູ່ນີ້ ຮູ້ບໍ່ວ່າພວກຂ້ອຍຊອກຫາເຈົ້າຈົນຫມົດທຸກຈອກທຸກແຈເອົາພຸ້ນ" ນໍ້າສຽງທີ່ໃສແຈ່ວຂອງວຽງປະພາດັງຂຶ້ນຢູ່ຂ້າງໆຕົວເຂົາ ໂອ້ນໍ້າສຽງນັ້ນຊ່າງມີມົນຂັງເຫລືອເກີນ ບໍ່ຫນ່ານາງຍັງວ່ານາງຊອກຫາເຂົາຜູ່ນີ້ອີກ ຫລືວ່າຫູຂອງເຂົາມັນຟາງໄປເອງບໍ່? "ແມ່ບອກວ່າເພີ່ນຊິພາພວກເຮົາອອກໄປລ້ຽງອາຫານທ່ຽງຫລັງພິທີແລ້ວ ຫລືວ່າເຈົ້າມີແຜນການແນວອື່ນໄວ້ກ່ອນແລ້ວບໍ່?" "ບໍ່! ຂ້ອຍບໍ່ມີແຜນການຫຍັງສໍາຫລັບມື້ນີ້ດອກ" ອິສຣະຟ້າວເວົ້າອອກໄປ ໃນຂະນະທີ່ໃນຫົວອົກນັ້ນເກີດມີຄວາມມີຊີວິດຊີວາຂຶ້ນມາໃນທັນໃດທີ່ໄດ້ຍິນວ່າແມ່ຂອງນາງ ຖືເຂົາເປັນຄືສະມາຊິກໃນຄອບຄົວຂອງເພີ່ນຄົນນຶ່ງ ຊຶ່ງຫາກວ່າເຂົາມີແຜນການຫຍັງໄວ້ ເຂົາກໍພ້ອມສເມີທີ່ຈະແລກປ່ຽນມັນກັບໂອກາດທີ່ຈະໄດ້ຢູ່ໃກ້ຊິດສນິດແນບແຫນ້ນກັບຄອບຄົວຂອງ ນາງ ອີກຢ່າງນັ້ນກໍແມ່ນເຂົາມີຄວາມຮູ້ສຶກເຄົາລົບຮັກນັບຖືແມ່ຂອງນາງບໍ່ຕ່າງຫຍັງ ກັບແມ່ຂອງເຂົາເອງທີ່ດຽວນີ້ກາຍເປັນພາບທີ່ລາງເລືອນໄປແລ້ວ

"ຂອບໃຈແມ່ພາ" ແລະດ້ວຍຄໍາເວົ້າດັ່ງກ່າວ ອິສຣະກໍກົ້ມຫົວລົງແລະກາບໄຫວ້ແມ່ຂອງວຽງປະພາຢ່າງນອບນ້ອມ ຫາກມີໃຜສັງເກດກໍຄົງຈະເຫັນວ່າມີຢາດນໍ້າຕາໃດນຶ່ງຍ້ອຍລົງມາຈາກເບົ້າຕາຂອງເຂົາ ຈົນເຂົາຕ້ອງປີ່ນຂ້າງຫນີເພື່ອເຊັດນໍ້າຕາຢົດນັ້ນ

"ຂໍໂທດ!" ອິສຣະເວົ້າເປັນສຽງສັ່ນເຄືອອອກມາ "ລູກພາແລະແມ່ຕ່າງກໍພູມໃຈໃນຕົວລູກຫລາຍ ເລີ້ອງເອົາລູກທັງສອງໄປລ້ຽງເຂົ້າທ່ຽງນັ້ນ ມັນຍັງນ້ອຍເກີນໄປສໍາຫລັບສິ່ງທີ່ແມ່ໄດ້ຮັບເປັນການຕອບແທນ" ແມ່ຂອງນາງຮູ້ດີວ່າອິສຣະເປັນຄົນທີ່ໂດດດ່ຽວແລະງຽບເຫງົາ

ຈາກຖ້ອຍຄຳທີ່ວຽງປະພາເວົ້າເຖິງເຂົາໃນທຸກຄັ້ງ
ແມ່ພາກໍຕະຫນັກວ່າຊາຍຫນຸ່ມຄົນນີ້ໄດ້ກາຍສ່ວນນຶ່ງທີ່ສຳຄັນຂອງລູກສາວຕົນເຂົ້າແລ້ວ
ດັ່ງນັ້ນບໍ່ວ່າຊາຍຫນຸ່ມຄົນໃດທີ່ລູກສາວມັກ
(ຫລືຖ້າຈະເວົ້າໃຫ້ຖືກຮັກແລ້ວແຕ່ແມ່ກໍຍັງບໍ່ທັນແນ່ໃຈຄັກແນ່ເທື່ອ) ແມ່ກໍພ້ອມທີ່ຈະເຫັນດີນຳ
ຍິ່ງໃນກໍຣະນີນີ້ ແມ່ພຶງພໍໃຈໃນສິ່ງທີ່ແມ່ເຫັນ - ຊາຍຫນຸ່ມທີ່ຮູ້ຈັກສັມມາຄາຣະວະຜູ່ໃຫຍ່
ແລະຄວາມເປັນຜູ່ໃຫຍ່ທີ່ເກີນກ່ວາອາຍຸທີ່ສໍ່ອອກມາຈາກທ່າທາງແລະດວງຕາທີ່ເສົ້າໆນັ້ນ
ນີ້ຖ້າຫາກແມ່ນຊາຍຫນຸ່ມຄົນນີ້ທີ່ລູກສາວຫມາຍຫມັ້ນປັ້ນຕໍ່ເພື່ອເອົາມາເປັນຄູ່ເປັນຄີ່ງໃນທີ່ສຸດ
ແມ່ກໍຄົງຈະຕາຍຕາຫລັບຢ່າງບໍ່ຕ້ອງເປັນຫ່ວງຫຍັງອີກຕໍ່ໄປແລ້ວ

ໃນໂອກາດນັ້ນເອງ ບຸນມີກໍຍ່າງກາຍມາພ້ອມກັບສາວນາງນຶ່ງທີ່ມີຫນ້າຕາຫວານເຢັນດີ
ດວງຕາທັງຫມົດຕ່າງກໍສັກໄປທີ່ຜູ່ມາໃຫມ່ທັງສອງ
ທຸກຄົນໃນທີ່ນີ້ຕ່າງກໍຮູ້ດີວ່າບຸນມີກຳລັງຈະຫມັ້ນກັບສາວນ້ອຍຄົນນຶ່ງຜູ່ຊຶ່ງຫາກໍ່ມາແຕ່ລາວໃຫມ່ໆ
ດ້ວຍວ່າຕ່າງຄົນກໍຕ່າງບໍ່ເຄີຍຮູ້ຜູ່ທີ່ຈະມາເປັນຄູ່ຫມັ້ນຂອງບຸນມີມາກ່ອນ
ກໍຈຶ່ງພຽງແຕ່ຫວັງວ່າຍິງສາວຄົນນີ້ຄົງຈະແມ່ນນາງໃນຝັນຂອງບຸນມີຢ່າງໃດຢ່າງນຶ່ງ
ແລະກໍດັ່ງທີ່ທຸກຄົນຄາດຫມາຍໄວ້ ບຸນມີກ່າວໂພ້ງໆອອກໄປວ່າ
"ນີ້ເດຍອດຍິງທີ່ເຮົາເວົ້າເຖິງເລື້ອຍໆ ລາວຊື່ວ່າວັນ
ພວກເຮົາຊິຫມັ້ນກັນໃນອີກສອງອາທິດທີ່ຈະມາເຖິງນີ້
ດັ່ງນັ້ນຈຶ່ງຢາກຂໍເຊີນທຸກໆຄົນມານະທີ່ນີ້ດ້ວຍ" ຈະເວົ້າແລ້ວບຸນມີກໍຊ່າງໄວໃນທຸກສິ່ງ
ອິສຣະກໍພຽງແຕ່ຫວັງວ່າ ຕົນນັ້ນຈະໂຊກດີກັບຍິງທີ່ຕົນຮັກເຊັ່ນດຽວກັບເພື່ອນຄົນນີ້

ຫລັງຈາກທີ່ທັກທາຍສົນທະນາກັນເປັນລະຍະນຶ່ງ
ຕ່າງຄົນກໍຕ່າງແຍກຍ້າຍກັນໄປຫາແຕ່ລະພາກສ່ວນຂອງຕົນ
ນັກຮຽນທີ່ຈົບຊັ້ນແມ່ນຢູ່ທາງຫນ້າເວທີສ່ວນຄອບຄົວແລະມິດສະຫາຍນັ້ນແມ່ນຢູ່ກະຈັດກະຈາຍກັນ
ຢູ່ອ້ອມໆຂ້າງເວທີມາຮອດຕອນນີ້ເດີ່ນທີ່ຈະເຮັດພິທີຈົບຊັ້ນຂອງໂຮງຮຽນ
ກໍເຕັມໄປດ້ວຍຜູ່ຄົນແລະກໍມີທີ່ທ່າວ່າຈະເລີ້ມພິທີຂຶ້ນຕາມຄາດຫມາຍຂອງເວລາທີ່ຕັ້ງໄວ້

ອິສຣະນັ້ນມີຄວາມຕື່ນເຕັ້ນຈົນວ່າຈະຫລຸດອອກມາຂ້າງນອກທີ່ໄດ້ເຫັນວຽງປະພານັ່ງບໍ່ໄກຈາກພາກ
ສ່ວນຂອງເຂົາຫລາຍປານໃດ ຈະເວົ້າແລ້ວພາກສ່ວນສມຸດບັນຊີຂອງນາງ
ແມ່ນຢູ່ຂ້າງກັບພາກສ່ວນວິສະວະກັມຂອງເຂົາ ໃນຂະນະທີ່ພິທີກຳລັງດຳເນີນໄປ
ທ່າມກາງສຽງຕົບມືໂຮ່ຮ້ອງຂອງຜູ່ຮ່ວມງານຫລັງຈາກແຕ່ລະຊື່ໄດ້ຖືກເອີ້ນຂານອອກມາ
ສາຍຕາຂອງອິສຣະແມ່ນວ່າຈັບຈຶ້ງຈັບຢູ່ແຕ່ກັບໃບຫນ້າຂອງນາງ

ທີ່ເຂົາຮັກຄ້າຍໆກັບວ່າພາບນັ້ນຈະເປັນພາບສຸດທ້າຍຂອງນາງ ຢູ່ໃນຫ້ອງນຶກຂອງເຂົານັ້ນ
ມັນຊ່າງມີຫລາຍສິ່ງຫລາຍຢ່າງທີ່ສູ້ຍັນກັນ ໃນເລື້ອງສິ່ງທີ່ດີທີ່ຮ້າຍຂອງເສັ້ນທາງອຸດົມການ
ແລ້ວທັງຫມົດນີ້ມັນຈະບໍ່ມີທີ່ຫວ່າງເຫລືອໄວ້ໃຫ້ວຽງປະພາ
ແມ່ຍອດດວງໃຈຂອງເຂົາຄືນນີ້ຈັກບ່ອນແດ່ບໍ່?

"ວຽງປະພາ ສີສວັນ ຂແນງສມຸດບັນຊີ" ສຽງຈາກລຳໂພງດັງຂຶ້ນ
ອິສຣະລຸກຢືນຂຶ້ນແລະຕົບມືທັງດັງທັງແຮງແລະທັງບໍ່ຍອມເຊົາງ່າຍໆເມື່ອເຫັນວຽງປະພາກ້າວຂຶ້ນສູ່
ເວທີຢ່າງຊຸ່ມຊ້ອຍເພື່ອຮັບເອົາປຣິນຍາບັດຊັ້ນຕຣີສາຂາສະມຸດບັນຊີ
ພາບຂອງຄວາມພາກພູມໃຈໃນກຽດສັກສີຂອງຄວາມເປັນລາວທີ່ມາໃນຮູບຂອງຄວາມງາມ
ແລະສະຕິປັນຍານຳເອົາຢາດນ້ຳຕາຫລາຍຢົດຈາກຄອບຄົວຂອງນາງແລະມິດສະຫາຍທີ່ໃກ້ຊິດ
ຕໍ່ແມ່ພາແລ້ວ ນີ້ເປັນເຄື່ອງຫມາຍວ່າຕົນນັ້ນໄດ້ລ້ຽງລູກມາຢ່າງດີທີ່ສຸດ
ຖ້າແມ້ນພຽງສາມີຂອງນາງຍັງຢູ່
ເຂົາຄົງຈະພາກພູມໃຈໃນຕົວຂອງລູກສາວບໍ່ຫລຸດລົ່ນກ່ວານາງໃນຂະນະນີ້ເລີຍ

ແລະອີກບໍ່ດົນປານໃດຕໍ່ມາ...

"ອິສຣະ ອະນຸວົງ ຂແນງວິສະວະກັມໄຟຟ້າ" ສຽງຈາກລຳໂພງຫນ່ວຍດັ່ງວ່າກໍດັງຂຶ້ນ
ມາບັດນີ້ມັນເປັນທີຂອງເຂົາແລ້ວທີ່ຈະກ້າວຂາຂຶ້ນສູ່ເວທີ
ພາບຂອງວຽງປະພາລຸກຢືນຂຶ້ນຕົບມືໃຫ້ເຂົາຊ່າງເປັນພາບທີ່ປະທັບຈິດຂອງເຂົາຢ່າງຫາອັນປຽບບໍ່
ໄດ້ ປຣິນຍາບັດທີ່ຫາໄດ້ຍາກນີ້ ເຖິງຈະມີຄຸນຄ່າອັນມະຫາສານໃນສາຍຕາຂອງຄົນທົ່ວໄປ
ແຕ່ສຳຫລັບເຂົາແລ້ວມັນກໍຍັງນ້ອຍໄປກ່ວາຄຸນຄ່າລາຄາທີ່ຍອດຍິ່ງຄົນນີ້ຈະມີໃຫ້ເຂົາໄດ້
ວຽງປະພາຄືບຸກຄົນທຳອິດທີ່ເຂົາຈ້ອງຢ່າງບໍ່ພິບຕາໃນຂະນະທີ່ມືເບື້ອງຂວາຍໍຍົກປຣິນຍາຂຶ້ນສູ່ຟ້າ
ສີ່ປີຂອງການຄົ້ນຄ້ວາຮ່ຳຮຽນໃນທີ່ສຸດເຂົາກໍເຫັນໄດ້ເຖິງຫມາກຜົນ
ແລະຕໍ່ໄປນີ້ຂໍຟ້າຈົ່ງປານີເຂົາດັ່ງທີ່ຟ້າມີຕໍ່ການສຶກສາເຂົານີ້ດ້ວຍ



VIII.

ມັນເປັນເວລາໃດນຶ່ງແລ້ວທີ່ອິສຣະໄດ້ເຂົ້າເຮັດວຽກໃຫ້ກັບບໍຣິສັດທີ່ມີຊື່ສຽງແຫ່ງນຶ່ງ
ມາບັດນີ້ເຂົາສາມາດທີ່ຈະຊື້ລົດມາຂີ່ແລະເສື້ອຜ້າທີ່ພໍເປັນຕາເບິ່ງໄດ້
ດ້ວຍວ່າບໍຣິສັດຂອງເຂົາມັນຢູ່ຫ່າງຈາກບ້ານຂອງວຽງປະພາ
ມັນຈຶ່ງມີເວລາພຽງທ້າຍອະທິດເທົ່ານັ້ນທີ່ເຂົາຈະມາຫານາງໄດ້ ໂດຍສັດຈິງແລ້ວ
ເຂົາສາມາດມາຫານາງໄດ້ຢູ່ທຸກໆມື້ຫລັງຈາກເລີກວຽກ ແຕ່ຄວາມຄິດທີ່ວ່າ
ເຂົາຄົງຈະມາຮອດມາເຖີງໃນເວລາທີ່ບໍ່ເຫມາະສົມເຊັ່ນໃນເວລາທີ່ຄອບຄົວຂອງນາງ
ພວມກິນເຂົ້າແລງຫລືສົນທະນາກັນຖານຄອບຄົວເປັນຕົ້ນ
ດັ່ງນັ້ນເຂົາຈຶ່ງບອກຕົນເອງວ່າບໍ່ຄວນຈະໄປ ນອກຈາກນັ້ນກໍແມ່ນວ່າ
ເຂົາບໍ່ຕ້ອງການຢາກໃຫ້ວຽງປະພາຄິດວ່າເຂົານັ້ນມາແຮງ
ຄວາມຮັກທີ່ເຂົາມີຕໍ່ນາງນັ້ນມັນເກີນກ່ວາຫນ້າຕາທີ່ເປັນຮູບໂສມພາຍນອກ
ກໍດັ່ງທີ່ເຂົາໄດ້ເຄີຍຂຽນໄວ້ແຕ່ກໍບໍ່ກ້າເອົາກະວີນັ້ນໄປໃຫ້ນາງຈັກເທື່ອ (ຊຶ່ງໃນທີ່ສຸດ
ເຂົາກໍສົ່ງກະວີນັ້ນໄປໃຫ້ນາງໂດຍບໍ່ບອກຊື່ສຽງຮຽງນາມດັ່ງເຊັ່ນເຄີຍ)



ຫາກຄວາມຮັກ...

ສຸດທີ່ຮັກ
ຫາກຄວາມຮັກ
ຄືດອກໄມ້ຜະລິຕ້ອນຮັບແສງຕະວັນ
ຄືສາຍລົມ ຄືສຽງເພງ
ຄືຢາກນ້ຳຄ້າງ ແລະຄືຄື້ນຟອງຂອງທະເລ
ທີ່ມີແຕ່ຄວາມບໍຣິສຸດສົດຊື່ນ
ຂ້ອຍຂໍມອບຄວາມຮັກນີ້ໃຫ້ແກ່ເຈົ້າ

ຄົງບໍ່ຈຳເປັນຕ້ອງບອກວ່າ
ດວງໃຈຂ້ອຍຜູກພັນຕໍ່ເຈົ້າຫລາຍພຽງໃດ
ບາງທີຄຳເວົ້າກໍບໍ່ຈຳເປັນ

..

ເຖິງຢ່າງໃດກໍດີ ທຸກຄັ້ງທີ່ອິສຣະມາຫາວຽງປະພາຢູ່ທີ່ເຮືອນຂອງນາງ
ເຂົາກໍເຫັນຊາຍຫນຸ່ມຫນັງຂາວຄົນນຶ່ງຢູ່ທີ່ນັ້ນແລ້ວ ລົດເກງ BMW
ສີແດງໃຫມ່ອັ່ງມຂອງຫມໍນັ້ນຈອດຢ່າງທ້າທາຍຢູ່ຕໍ່ຫນ້າເຮືອນ
ພາບດັ່ງກ່າວເຮັດໃຫ້ເຂົາຕ້ອງວ້າວຸ່ນໃຈ
ແລະເມື່ອມາໄດ້ຍິນວ່າຊາຍຫນຸ່ມຄົນນັ້ນຫມາຍຫມັ້ນທີ່ຈະເອົາຊະນະໃຈຂອງວຽງປະພາໃຫ້ໄດ້
ອິສຣະກໍແຮ່ງເປັນພະວ້າພະວົງໃຈຫນັກເຂົ້າໄປກ່ວາເກົ່າ ໂດຍສັດຈິງແລ້ວ
ມັນບໍ່ມີທາງທີ່ເຂົາຈະໄປແຂ່ງກັບຊາຍຫນຸ່ມຄົນນັ້ນໄດ້ ໄດ້ຍິນວ່າທັງສອງເຮັດວຽກຢູ່ບ່ອນດຽວກັນ
ແລະດ້ວຍວ່າແຈຣີ (Jerry) ຢູ່ໃນຖານະເຈົ້ານາຍນາງ ທັງເປັນຜູ່ສິດສອນວຽກງານໃຫ້ນາງດ້ວຍ
ດັ່ງນັ້ນທີ່ວ່າແຟນໃຫມ່ຂອງນາງແມ່ນຢູ່ໃນຖານະໄດ້ປຽບເຂົາທຸກຢ່າງ ນີ້ລະເພິ່ນວ່າ
ເມື່ອອອກນອກຮົ້ວຂອງໂຮງຮຽນແລ້ວ
ທຸກສິ່ງກໍຊ່າງແສນສັບສົນໂດຍສະເພາະຢ່າງຍິ່ງກໍແມ່ນສຳຫລັບເຂົາກັບນາງ
ຊຶ່ງບໍ່ທັນສ້າງຄວາມຮັກໃຫ້ແຫນ້ນແຟ້ນໃຫ້ແນ່ໃຈແກ່ກັນແລະກັນເທື່ອ

ເມື່ອເປັນດັ່ງວ່າ ອິສຣະກໍນັບມື້ນັບວັນກາຍເປັນຄົນອື່ນໃນສາຍຕາຂອງຄອບຄົວນາງ
ຢ່າງຫລີກລ້ຽງບໍ່ຫມົ້ນ ທັງນັ້ນທັງນີ້ກໍເພາະມັນເປັນຄວາມຜິດຂອງເຂົາເອງ
ທີ່ບໍ່ຕັດໃຈຢ່າງແນ່ວແນ່ວ່າຈະເດີນໄປທາງໃດແທ້ ຄວາມຮັກຫລືອຸດົມການ?
ຄວາມເປັນເພື່ອນທີ່ເປັນຫ່ວງເປັນໃຍກັນນັ້ນມັນບໍ່ພຽງພໍທີ່ຈະສະກັດກັ້ນແລະຫ້າມປາມອີກຝ່າຍນຶ່ງ
ໃຫ້ປັກໃຈລົງກັບຄົນທີ່ຕົນຖືວ່າຈິງໃຈກັບຕົນນັ້ນແທ້

ເຂົາຈື່ໄດ້ວ່າ ມີຄັ້ງນຶ່ງທີ່ແຈຣີຕ້ອງເດີນທາງໄປຕ່າງເມືອງ
ອັນເຮັດໃຫ້ເຂົາໄດ້ມີໂອກາດໄດ້ຢູ່ໃກ້ກັບຄົນທີ່ຕົນຮັກຢ່າງລຳພັງນັ້ນ
ວຽງປະພາກັບຍົກເລື້ອງຂອງຫມໍນັ້ນຂຶ້ນມາເພື່ອຂໍຄຳປຶກສາວ ນາງວ່າແຈຣີສເນີຂໍແຕ່ງງານກັບນາງ
ຊຶ່ງນັ້ນເປັນສິ່ງທີ່ເຂົາບໍ່ຢາກໄດ້ຍິນຈັກຫນ້ອຍ ແຕ່ໃນຖານະເພື່ອນທີ່ເຂົາສວມຫນ້າກາກຢູ່ນີ້
ເຂົາກໍຈຳເປັນຕ້ອງໃຫ້ຄຳປຶກສາແກ່ນາງໂດຍເວົ້າໄປວ່າ ແຈຣີນັ້ນເປັນຄົນມີເງິນຄຳ
ຕຳແຫນ່ງການງານດີ ແລະແວດວົງສັງຄົມອັນກ້ວາງຂວາງຊຶ່ງສາມາດຊີ້ໃນ້ໃຫ້ເປັນນົກໄດ້
ເຫນືອສິ່ງອື່ນໃດຫມົດກໍແມ່ນວ່າແຈຣີຢູ່ໃນຖານະທີ່ຈະໃຫ້ຄວາມສຸກແກ່ນາງໄດ້

ດັ່ງນັ້ນຫາກນາງເລືອກທີ່ຈະລົ້ມຫົວລົງທ້າຍນຳແຈຣີ ເຂົາກໍຄົງຈະບໍ່ມີຫຍັງຂັດຂ້ອງ ແຕ່ກ່ອນຈະອຳລາວຽງປະພາໄປນັ້ນ ອິສຣະກໍບອກນາງວ່າ ທຸກສິ່ງຢ່າງແມ່ນຂຶ້ນກັບນາງເອງ ບໍ່ວ່ານາງຈະຕັດສິນໃຈແນວໃດ ເຂົາກໍພ້ອມແລ້ວຈະເຫັນດີນຳ

ຕລອດເສັ້ນທາງທີ່ກັບຄືນໄປຫາທີ່ພັກຂອງຕົນເອງ
ອິສຣະຮູ້ສຶກວ່າຫົວຂອງເຂົາເປັນວິນວຽນດັ່ງກັບໂລກນີ້ທັງໂລກຫມູນປິ່ນຢ່າງແຮງ
ການສົນທະນາກັບວຽງປະພາໃນແລງມື້ນີ້ຜຸດພົ້ນຂຶ້ນມາຢູ່ໃນຫ້ວງນຶກຂອງເຂົາເທື່ອແລ້ວກໍເທື່ອອີກ
ພາບໃນຕາເສົ້າໆຂອງນາງລ້ວນແຕ່ບອກເຂົາໃຫ້ຕະຫນັກວ່າ ນາງນັ້ນບໍ່ຮູ້ຈະເດີນໄປທາງໃດ
ຊຶ່ງນັ້ນທໍຣະມານຫົວໃຈເຂົາຢ່າງຍິ່ງ ມັນເປັນທີ່ແນ່ນອນວ່ານາງກໍມີໃຈໃຫ້ເຂົາ
ແລະຖ້າເປັນຢ່າງນີ້ເຂົາຈະເຮັດແນວໃດດີກັນແທ້
ຫລືວ່າເຂົາຄວນຈະທຸ່ມເທທຸກສິ່ງຢ່າງເພື່ອຈະໃຫ້ໄດ້ຊຶ່ງນາງມາ? ຫລືວ່າມັນສ່ວາຍເກີນໄປແລ້ວ?
ໃນຄວາມຄິດດັ່ງເດີມນັ້ນອິສຣະວາດໄວ້ວ່າ
ເຂົາຈະຊອກຫາເຮັດວຽກໃຫ້ກັບບໍຣິສັດທີ່ມີກິດຈະການຢູ່ໃນລາວ
ຫລັງຈາກນັ້ນເຂົາຈະພະຍາຍາມຫາວິທີເອົາວຽງປະພາເຂົ້າເຮັດວຽກໃນບໍຣິສັດນັ້ນ
ໂດຍຫວັງວ່າໃນທີ່ສຸດທັງວຽງປະພາແລະເຂົາຈະໄດ້ໄປເຮັດວຽກຢູ່ລາວນຳກັນ
ຊຶ່ງນັ້ນຄົງຈະໃຊ້ເວລາອີກສອງປີ ແລະເມື່ອເຖິງຕອນນັ້ນ
ເຂົາກໍຈະປະກາດຕົວໄດ້ຢ່າງເຕັມປາກເຕັມຄຳວ່າ ວຽງປະພາຄືສຸດທີ່ຮັກຂອງເຂົາ
ແລະກໍຄືຍິງສາວທີ່ເຂົາຈະຂໍເປັນທອງແຜ່ນດຽວກັບນາງຈົນຕລອດຊົ່ວຊີວິດ
ແຕ່ມາບັດນີ້ເມື່ອມີມືທີສາມເຂົ້າມາແຊກຊ້ອນ
ທຸກສິ່ງກໍປຽບເຫມືອນເປັນພຽງຄວາມຝັນທີ່ຊ້ຳສ່ວາຍແລະກໍບໍ່ມີວັນທີ່ຈະເປັນຈິງໄດ້ອີກຕໍ່ໄປແລ້ວ
ນີ້ລະນໍເກີດມາເປັນຄົນທີ່ຊິງໄວ້ຊຶ່ງອຸດົມການ ອິສຣະຈຶ່ງບໍ່ອາດຮູ້ໄດ້ເຖິງວິຖີທາງເດີນຂອງໂລກ
ໂດຍສະເພາະກໍແມ່ນໂລກຂອງຄວາມຮັກຊຶ່ງຕ້ອງການການອອດອ້ອນເວົ້າວອນແລະການໄປມາຫາສູ່ເປັນປະຈຳ

ຕັ້ງແຕ່ເຫດການຄືນນັ້ນເປັນຕົ້ນມາ
ອິສຣະກໍຫາຍຫນ້າໄປຈາກບ້ານຂອງວຽງປະພາຢ່າງຜິດປົກກະຕິ ບາງຄັ້ງຄາວ
ກໍຈະບໍ່ເຫັນເຂົາມາແວະວຽນເປັນຕັ້ງຫລາຍອະທິດ
ດ້ວຍວ່າວຽງປະພາເຄີຍເຫັນອິສຣະມາເປັນປະຈຳຊຶ່ງຢ່າງນ້ອຍກໍອະທິດລະເທື່ອ
ນາງຈຶ່ງຮູ້ສຶກເປັນຫ່ວງເຂົາ ບາງຄັ້ງຄາວນາງເອງກໍຮູ້ສຶກເສົ້າງ່ວມເຫງົາຢ່າງບອກບໍ່ຖືກ
ການເຫັນແຈຣີນັ້ນກໍບໍ່ຄືເຫັນເຂົາ ແມ້ນກະທັ່ງວ່າແຈຣີຈະນັ່ງຢູ່ຕໍ່ຫນ້ານາງ
ສາຍຕາຂອງນາງກໍເຝົ້າເມີມອງໄປທີ່ຖນົນຕັດເຂົ້າບ້ານ

ຫວັງວ່າເຂົາຈະດ້ວຍເຫດໃດກໍຕາມໂຜ່ໜ້າເຂົ້າມາ ເຖິງຢ່າງໃດກໍດີນາງກໍບໍ່ອາດຍອມຮັບໄດ້ວ່າ
ນາງຮັກເຂົາຢ່າງໝົດຈິດໝົດໃຈ
ຊຶ່ງນັ້ນຫາກຈະຖືກໍແມ່ນວ່ານາງນັ້ນຜູກພັນຕໍ່ເຂົາຢ່າງໝົດຈິດໝົດໃຈຕ່າງຫາກ
ເຫດທີ່ເປັນເຊັ່ນນີ້ກໍເພາະເຂົາໄດ້ກາຍເປັນສ່ວນນຶ່ງທີ່ສຳຄັນຂອງນາງຕັ້ງແຕ່ຍັງບໍ່ທັນຈົບການສຶກສາ
ພຸ້ນ ນາງຍັງຈື່ຈຳໄດ້ເຖິງບົດກະວີບົດນຶ່ງຊຶ່ງຈາກລີລາການຂຽນ
ນາງກໍຮູ້ແນ່ແກ່ໃຈວ່າບົດກະວີນີ້ຈະຕ້ອງແມ່ນເຂົາຂຽນຂຶ້ນ ບົດກະວີນັ້ນຂຽນວ່າ...



ແມ່ເທບທິດາຂອງຂ້ອຍ

ໃນຝັນ
ຂ້ອຍຝັນເຫັນເຈົ້າ

ປະຄອງລູບໄລ້ເສັ້ນຜົມຂອງຂ້ອຍ
ດ້ວຍຝາມືທີ່ຖະນຸຖະນອມ
ແລະດ້ວຍດວງຕາທີ່ອ່ອນໂຍນ

ໃນຍາມຕື່ນ
ຂ້ອຍມອງເຫັນເຈົ້າ
ຍີ້ມໃຫ້ຂ້ອຍຢ່າງອ່ອນຫວານ
ດັ່ງຕະວັນຍີ້ມໃຫ້ໂລກ
ດັ່ງດວງເດືອນຍີ້ມໃຫ້ນະພາ

ໃນຍາມຢູ່ໃກ້
ຂ້ອຍຮູ້ສຶກໄອອຸ່ນຂອງເຈົ້າ
ປິວກະຈອນມາເຖິງຂ້ອຍ
ເຮັດໃຫ້ທົ່ວສາຣະພາງຮ່າງຄືງວາບຫວິວ
ແລະຕົກຢູ່ໃນພະວັງແຫ່ງຄວາມຫລັບຝັນ

ໃນຍາມຫ່າງໄກ
ໂລກຂອງຂ້ອຍເປັນສີເທົາ
ໃບໄມ້ຮ່ວງຫລົ່ນ
ແລະນົກນ້ອຍບໍ່ຂັບຂານ
ຍາມຮ້ອນກໍສຸດຈະຮ້ອນ
ຍາມໜາວກໍສຸດຈະໜາວ
ດັ່ງດວງໃຈດວງນີ້ຈະແຕກລະລາຍ

...

"ລູກພາເປັນແນວໃດມື້ນີ້ຄືເປັນຕາເສົ້າໆ ບໍ່ສະບາຍບໍ່?"
ແມ່ຂອງນາງຖາມຂຶ້ນດ້ວຍຄວາມເປັນຫ່ວງ
ພາຍຫລັງທີ່ເຂົ້າໄປເບິ່ງລູກສາວທີ່ຍັງຄົງນອນຈົມຢູ່ໃນຫ້ອງນອນ
"ລູກບໍ່ໄດ້ເປັນຫຍັງດອກແມ່ ມີແຕ່ບໍ່ທັນຢາກລຸກອອກຈາກບ່ອນຊື່ໆ"
ນາງຕອບແມ່ຂອງນາງດ້ວຍນ້ຳສຽງທີ່ພະຍາຍາມຈະໃຫ້ເປັນຊື່ໆ"

"ຖ້າລູກມີຫຍັງຢາກຈະເວົ້າລົມນຳແມ່ກໍເວົ້າອອກມາ ແມ່ຍິນດີຮັບຟັງຢູ່ສເມີ"
ແມ່ພາໂດຍສັນຊາດສະຍານຂອງຄວາມເປັນແມ່ທີ່ຮູ້ຈັກລູກຂອງຕົນດີກໍຍ່ອມຮູ້ໃນທັນໃດວ່າ
ນີ້ຄົງເປັນເລື້ອງຂອງຫົວໃຈ ເພາະຖ້າຫາກບໍ່ເປັນເລື້ອງນີ້ແລ້ວ
ລູກສາວຂອງຕົນບໍ່ຫ່ອນຈະໄຫວຫວັ່ນຫຍັງງ່າຍໆ

ດ້ວຍຄຳເວົ້າທີ່ເຂົ້າໃຈໄດ້ເຖິງຫົວໃຈຂອງລູກແລະເຊື່ອໄດ້ເຖິງຄວາມເປັນຫ່ວງຢ່າງແທ້ຈິງທີ່ແມ່ນັ້ນ
ມີຕໍ່ລູກ ວຽງປະພາຈຶ່ງຄ່ອຍໆເຜີຍຄວາມໃນໃຈອອກມາໃຫ້ແມ່ໄດ້ຮັບຮູ້ໃນທີ່ສຸດ...
"ແມ່! ອິສຣະບໍ່ໄດ້ມາຫລິ້ນນຳພວກເຮົາໄດ້ສີ່ອາທິດແລ້ວແມ່ນບໍ່?"

"ສີ່ອາທິດ" ແມ່ນຕົວເລກທີ່ວຽງປະພາເວົ້າອອກມາຢ່າງແຈ່ມແຈ້ງ
ຕົວເລກດັ່ງກ່າວລ້ວນບອກໃຫ້ແມ່ພາຕະຫນັກວ່າລູກສາວຂອງຕົນນັ້ນຄິດຮອດຄິດເຖິງອິສຣະ
ເຂົ້າຢ່າງຫນັກ ແມ່ເອງກໍຄິດເຖິງເຂົາຄືກັນ ຖ້າແມ້ນພຽງແຈຣີເປັນອິສຣະ
ແມ່ຄົງຈະເປັນຄົນທີ່ມີຄວາມສຸກທີ່ສຸດ ແຈຣີນັ້ນກໍບໍ່ແມ່ນວ່າໃຊ້ການບໍ່ໄດ້
ແຕ່ໃຜຈະບໍ່ຢາກເລືອກລູກເຂີຍຖ້າຫາກວ່າຕົນນັ້ນສາມາດເລືອກເອົາໄດ້ຕາມໃຈມັກ

"ແມ່ນຄືຄວາມລູກວ່າ ລາວຄືຊິຄາວຽກຄາງານຕິຈຶ່ງຫລີກຕົວມາບໍ່ໄດ້ ເອົາຈັ່ງຊີ້ສະ
ທິດຫນ້ານີ້ພວກເຮົາເຮັດປີກນິກ (Picnic) ກັນຢູ່ພ່າກ (ສວນສາທາຣະນະ Park)
ເຊີນອິສຣະມາຮ່ວມນຳກໍຊິດີໃດ່" ແມ່ພາຜູ່ເຫັນໃຈລູກກໍຫາວິທີຂຶ້ນໃນທັນໃດເພື່ອຊ່ອຍລູກສາວ
ໂດຍສັດຈິງແລ້ວ ວຽງປະພາກໍບໍ່ຕ່າງຫຍັງກັບແມ່ເອງທີ່ຄັ້ງນຶ່ງເຄີຍຕົກຫລຸມຮັກ
ຢ່າງຖອນຕົວບໍ່ຂຶ້ນກັບພໍ່ຂອງລູກສາວຄົນນີ້ ຫາກຈະຕ່າງກໍແຕ່ວ່າ
ຊາຍຄົນນັ້ນເປັນຜູ່ທີ່ແມ່ລົ້ມຫົວນອນເສື່ອນຳໃນທີ່ສຸດນັ້ນເອງ ແມ່ກໍໄດ້ແຕ່ຫວັງວ່າ
ລູກສາວຂອງຕົນຈະໂຊກດີເຊັ່ນກັນກັບແມ່
"ຖ້າພວກເຮົາເຊີນໄປ ແລ້ວລາວບໍ່ມາເດ?" ວຽງປະພາຖາມຂຶ້ນດ້ວຍຄວາມບໍ່ແນ່ໃຈ
ເພາະຫລັງໆນີ້ເບິ່ງຄືວ່າບໍ່ມີຫຍັງເປັນສິ່ງທີ່ແນ່ນອນເອົາເລີຍ
"ແມ່ເຊື່ອແນ່ວ່າ ອິສຣະຕ້ອງມາໃຫ້ໄດ້" ແມ່ພາຮູ້ຢ່າງເຕັມອົກວ່າອິສຣະເປັນຄົນຊນິດໃດ
ຖ້າຫາກວ່າແມ່ຫລືວຽງປະພາຮ້ອງຂໍສິ່ງໃດຈາກເຂົາ
ເຂົາກໍພ້ອມສເນີທີ່ຈະຂ້າມຟ້າຂ້າມທະເລຫາມາໃຫ້ໄດ້ ດັ່ງນັ້ນລຳພັງມາຮ່ວມປີກນິກນຳເທົ່ານີ້
ອິສຣະບໍ່ທ່ອນທີ່ຈະເຮັດນຳບໍ່ໄດ້

ໃນທີ່ສຸດດ້ວຍການຮັບປາກຢ່າງຂັນແຂງຈາກແມ່ວ່າເຮັດແນວໃດອິສຣະກໍຕ້ອງມາ
ໃບຫນ້າຂອງວຽງປະພາຈຶ່ງມີສີສັນຂຶ້ນມາ ນີ້ຫາກອິສຣະອາດເອື້ອມຮູ້ໄດ້ວ່າ
ເຂົາມີຄຸນຄ່າລາຄາຕໍ່ສວັດດີພາບຂອງນາງຫລາຍປານໃດ ເຂົາຈະຮູ້ສຶກຢ່າງໃດນໍ?

IX.

ນະທີ່ສວນສາທາຣະນະ...
ວຽງປະພາເອົາຫມາກໄມ້ອອກຈາກຖົງແລ້ວກໍວາງໄວ້ເທິງສາດ
ແມ່ພານັ້ນກຳລັງຍຳສລັດໃນຂະນະທີ່ນ້ອງຊາຍຂອງນາງເຮັດຈີ່ນຊີ້ນ (barbecue)
ມື້ນີ້ຕາມແຜນການແມ່ນວ່າຈະເຮັດຕຳຫມາກຫຸ່ງກິນກັບຊີ້ນຈີ່ນແລະສລັດ

ບ່າຍມື້ນີ້ຕາເວັນເຕັມຟ້າບາງຄັ້ງຄາວກໍມີເມັກເຝື້ອມາມືດບັງພໍໃຫ້ອາກາດບໍ່ຮ້ອນຈົນເກີນໄປ
ຈະເວົ້າມັນກໍບໍ່ແມ່ນຍາມຮ້ອນແຕ່ກັບເປັນລະດູໃບໄມ້ຫລົ່ນ
ແຕ່ດ້ວຍວ່າປີນີ້ອາກາດມັນຜັນແປແດ່ເລັກນ້ອຍ ມັນຈຶ່ງຍັງຮ້ອນພໍໃຫ້ລີ້ແດດ
ເຖິງຢ່າງໃດກໍດີຢູ່ຕາມໃບຫຍ້າ ແຄມທາງຍ່າງ
ຫລືຈະເວົ້າໄປແລ້ວເກືອບວ່າຫມົດທຸກໆບ່ອນແມ່ນເຕັມໄປດ້ວຍໃບໄມ້ເຫລືອງທີ່ຫລົ່ນກັນເປັນສາຍ
ລົງມາ ວຽງປະພາຫລຽວເຫັນພາບດັ່ງກ່າວແລ້ວກໍອົດທີ່ຈະເສົ້າໃຈບໍ່ໄດ້
ຍິ່ງວ່າເມື່ອນາງແນມໄປເຫັນຕົ້ນໄມ້ທີ່ຄັ້ງນຶ່ງເຕັມໄປດ້ວຍໃບໄມ້ສີຂຽວອຸ່ມທຸ່ມ
ແຕ່ມາດຽວນີ້ຈະເຫລືອໄວ້ກໍພຽງໃບໄມ້ສີເຫລືອງຫລືບາງຕົ້ນຫັ້ນກໍເຫລືອແຕ່ກິ່ງກ້ານສາຂາ
ທີ່ແສນຈະໂດດດ່ຽວ ນາງກໍອົດບໍ່ໄດ້ທີ່ຈະຄິດເຖິງຊີວິດຂອງນາງເອງ

ອິສຣະຊິມາບໍ່? ແລ້ວຖ້າເຂົາບໍ່ມາ
ມັນຊິບໍ່ຫມາຍຄວາມວ່ານັ້ນຄືຈຸດອະວະສານຂອງເສັ້ນທາງທີ່ເຄີຍສ້າງລະຫວ່າງເຮົາກັບເຂົາບໍ່?

"ລູກພາ ຫັ້ນເດອິສຣະກຳລັງມາແລ້ວ"
ແມ່ພາຮ້ອງບອກລູກສາວຊຶ່ງກຳລັງວຸ່ນວາຍຕົນເອງກັບຄຳຖາມຢ່າງສັມມະປີຢ່າງ
ພຽງແຕ່ຍິນຊື່ຂອງເຂົາເທົ່ານັ້ນ ໃບຫນ້າຂອງວຽງປະພາກໍສວາດສເວີຍຂຶ້ນມາໃນທັນໃດໂລດ
ມາບັດນີ້ໃບໄມ້ທີ່ລ່ວງຫລົ່ນນັ້ນກໍບໍ່ເປັນພາບທີ່ງອຍເຫງົາແລະເສົ້າຊຶມອີກຕໍ່ໄປ
ໃນສາຍຕາຂອງນາງເຫັນຊາຍຫນຸ່ມທີ່ດວງໃຈຂອງນາງຢາກຈະເຫັນຢາກຈະພົບຢາກຈະເວົ້າຈານຳ
ຍ່າງຫຍັບຍ້າຍເຂົ້າມາຫານາງ ມື້ນີ້ອິສຣະໃສ່ເສື້ອສີໂປໂລ (Polo) ສີຂາວແລະສົ້ງດອກເກີ
(Docker) ສີຟ້າແກ່ ເບິ່ງໆແລ້ວເຂົາຊ່າງສງ່າງາມຂຶ້ນ ແມ້ນຫາກພຽງເຂົາເປັນດັ່ງເມື່ອກ່ອນ
ນາງຄົງຈະມີຄວາມສຸກທີ່ສຸດ ໂອ້ອິສຣະ!

"ຕ້ອງຂໍໂທດຫລາຍໆທີ່ເຮັດໃຫ້ທຸກຄົນຕ້ອງໄດ້ລໍຖ້ານຳ"
ອິສຣະກ່າວຄຳຂໍໂທດທັນທີທີ່ເຂົາໄປຮອດໄປເຖິງສະຖານທີ່ປິກນິກ
ເຖິງແມ່ນວ່າເຂົາຈະບໍ່ເວົ້າຫຍັງຫລາຍ
ວຽງປະພາກໍສັງເກດໄດ້ວ່າມີຮ່ອງຮອຍຂອງຄວາມເສົ້າຝັງເລິກຢູ່ໃນນ້ຳສຽງທີ່ສຸພາບອ່ອນໂຍນນັ້ນ
ອີກຢ່າງກໍແມ່ນວ່າ ເບິ່ງຊົງເຂົາຄືຜ່ອມຕົວລົງໄປ

"ລູກພາແມ່ນວ່າຢາກໃຫ້ລູກມາອີຫລີ"
ແມ່ພາເວົ້າໃນສິ່ງທີ່ວຽງປະພາຢາກຈະເວົ້າແຕ່ບໍ່ຫານກ້າເວົ້າອອກມາ

ດ້ວຍວ່າຄຳເວົ້າດັ່ງກ່າວສະທ້ອນເຖິງຄວາມຮູ້ສຶກທີ່ແທ້ຈິງຂອງນາງ
ແກ້ມຂອງນາງຈຶ່ງແດງເປັ່ງປັ່ງຂຶ້ນດ້ວຍຄວາມອາຍ

"ແມ່ແລະພາຕ່າງກໍດີນຳລູກຫລາຍ ລູກຫວັງຢ່າງຍິ່ງວ່າ
ມື້ໃດມື້ນຶ່ງລູກຄົງຈະໄດ້ມີໂອກາດຕອບບຸນແທນຄຸນໃນຄຸນງາມຄວາມດີນີ້"
ອິສຣະກ່າວຖ້ອຍຄຳນັ້ນອອກໄປດ້ວຍນ້ຳສຽງທີ່ແຜ່ວເບົາ
ບາງຄັ້ງຄາວວຽງປະພາກໍຮູ້ສຶກວ່າດວງໃຈຂອງເຂົານັ້ນກຳລັງຮ້ອງໄຫ້

"ອິສຣະ ເບິ່ງຄືເຈົ້າຈືດຊີດໄປ ບໍ່ແມ່ນບໍ່ສະບາຍບໍ່?"
ວຽງປະພາອົດທີ່ຈະຖາມເຖິງສຸຂພາບຂອງເຂົາບໍ່ໄດ້
ນາງຮູ້ແກ່ໃຈວ່ານັ້ນເປັນສິ່ງທີ່ບໍ່ສົມຄວນຈະຖາມ
ແຕ່ນ້ຳຫນັກທີ່ຫລຸດໄປຂອງເຂົາເຮັດໃຫ້ນາງຕ້ອງເປັນຫ່ວງ

"ຂອບໃຈພາຫລາຍໆທີ່ຍັງເປັນຫ່ວງ ຂ້ອຍບໍ່ເປັນຫຍັງດອກ ສົງໃສວ່າເຮັດວຽກຫລາຍເກີນໄປຕື່
ຈຶ່ງເບິ່ງຄືຈືດຊີດໄປ" ອິສຣະໂດຍສັນຊາດສະຍານກໍບໍ່ຍອມເຜີຍເຖິງເຫດຜົນທີ່ແທ້ຈິງວ່າ
ເປັນຫຍັງເຂົາຈຶ່ງບໍ່ເປັນອັນກິນອັນນອນມາໄດ້ຫລາຍອະທິດ
ພາບຂອງວຽງປະພາກັບແຈຣີທີ່ຕຳຕາຕຳໃຈນັ້ນປະກອບເຂົ້າກັບຄວາມສຳນຶກທີ່ວ່າ
ເຂົາຈະຕ້ອງສູນເສັຽນາງໄປໃນອີກເວລາບໍ່ດົນໄດ້ທຳລາຍລ້າງຊຶ່ງຄວາມຫິດໂຫຍໃນເຂົ້າປາອາຫານ
ໃດໆທັງສິ້ນ ແມ້ນກະທັ່ງໃນມື້ນີ້ ເຂົາເຖິງກັບຄິດວ່າຊິບໍ່ມາອີກຊ້ຳ
ເຫດທີ່ເປັນເຊັ່ນນີ້ກໍເພາະເຂົາບໍ່ຕ້ອງການທີ່ຈະທໍຣະມານຈິດໃຈຕົນເອງກັບສິ່ງທີ່ເປັນໄປບໍ່ໄດ້
ເປັນຫຍັງເຂົາຈຶ່ງບໍ່ພະຍາຍາມທີ່ຈະຫລົງລືມນາງ?
ມັນຄົງຈະດີແກ່ທັງນາງແລະຄອບຄົວຫາກເຂົາຈະປະກາດຕົວເອງເຖິງຄວາມປາໄຊໃນເກມຮັກນີ້
ເຂົາຫວັງວ່າດ້ວຍການທຳຕົວໃຫ້ຫນີຫ່າງຈາກນາງຈົນໄກເທົ່າທີ່ຈະໄກໄດ້
ຈະຊົງໄວ້ຊຶ່ງພາບເກົ່າທີ່ເຂົາເຄີຍເຫັນນາງເປັນຄັ້ງທຳອິດ
ແລະເຄີຍຮັກນາງເປັນຊີວິດຈິດໃຈຢູ່ຈົນຕລອດເທົ່າຊົ່ວຊີວັງຂອງເຂົາ

ເປັນຫລາຍເທື່ອທີ່ອິສຣະພະຍາຍາມທີ່ຈະຫລຽວໄປທາງອື່ນ
ແຕ່ສາຍຕາຂອງເຂົາກໍຍັງຄົງຫມູນວຽນກັບມາຫາດວງປະພາຢູ່ບໍ່ເຊົາ ເຂົາຕະຫນັກດີວ່າ
ເມື່ອມີນາງຢູ່ໃນສາຍຕາແລ້ວ ໂລກນີ້ກໍບໍ່ສຸດແສນທີ່ຈະເປົ່າປ່ຽວເອກາອີກຕໍ່ໄປ
ກົງກັນຂ້າມໂລກນີ້ເມື່ອມີນາງ ມັນກໍສຸດແສນທີ່ຈະມີຊີວິດຊີວາແລະຊົມຊື່ນປີຕິຢ່າງຫາອັນປຽບບໍ່ໄດ້
"ອິສຣະ ກິນຫມາກແອປໂປງ (apple)ຈັກຫນ່ອຍນໍ ເອົ໋າ!ຫນ່ອຍເປັນຕາກິນຕາກິນ"
ວຽງປະພາເດ່ມືຍື່ນຫມາກແອປໂປງສີແດງສາດສວຍໃຫ້ແກ່ອິສຣະ

ດ້ວຍສາຍຕາທີ່ສຸດແສນຈະຊຶ້ງໃນນ້ຳໃຈຂອງນາງ
ອິສຣະເດ່ມືໄປຮັບແລະຈັບເອົາຫມາກແອປໂປງຫນ່ອຍນັ້ນມາໄວ້ໃນອຸ້ງມືຢ່າງຖະນຸຖະນອມ
ດັ່ງນຶ່ງແມ່ນປາຍມືຂອງວຽງປະພາເອງ ໃນອີກບໍ່ດົນ
ອິສຣະກໍເລີ້ມຮູ້ສຶກວ່າວຽງປະພານັ້ນຍັງຄົງມີເຂົາຢູ່ໃນດວງໃຈຂອງນາງບ່ອນໃດບ່ອນນຶ່ງຢູ່
ບາງທີທຸກສິ່ງຢ່າງຄົງຈະຍັງບໍ່ສ່ວາຍເກີນໄປ
ບາງທີອະດີດເກົ່າໆທີ່ເຕັມໄປດ້ວຍວັນແຫ່ງຄວາມຫວານຊື່ນຄົງຈະຫວນຍ່ອນຄືນມາໃຫມ່ອີກ

ໃບໄມ້ເຫລືອງໃບນຶ່ງກຳລັງປີວວ່ອນລົງມາແລະກໍມາລົງຢູ່ກະໂຕເທິງຜົມທີ່ສີດຳສະລົວ
ຂອງວຽງປະພາ ບໍ່ທັນໄດ້ຄິດວ່າຈະຄວນເຮັດຫຍັງຫລືບໍ່? ອິສຣະກໍເດ່ມືໄປຈັບເອົາໃບໄມ້ນັ້ນອອກ
ເຖິງແມ່ນວ່າຈະລະມັດລະວັງພຽງໃດ ມືຂອງເຂົາກໍຍັງຖືກຕ້ອງເຖິງເສັ້ນຜົມທີ່ງາມດຳຂອງນາງ
"ຂໍໂທດພາ" ອິສຣະຈັບຖືເອົາໃບໄມ້ນັ້ນແລ້ວກໍບັນຈົງວາງມັນໄວ້ໃນຖົງເສື້ອແນບອົກຂອງເຂົາ
ເມື່ອເຫັນພາບທີ່ສຸດແສນຈະມີຄວາມຫມາຍນີ້ ວຽງປະພາກໍຍິ້ມໃຫ້ເຂົາຢ່າງເຂົ້າໃຈ ໂອ້ອິສຣະ
ເຈົ້າກໍຊ່າງເປັນຜູ່ຊາຍທີ່ຫນ້າຮັກແທ້ໆ

ຢູ່ອີກສົ້ນນຶ່ງຂອງສາດປູນັ້ນ
ແມ່ພາສັງເກດເຫັນວ່າໃນທີ່ສຸດຫນຸ່ມສາວທີ່ມີໃຈໃຫ້ກັນນີ້ກໍເຂົ້າໃຈກັນໄດ້ໃນທີ່ສຸດ
ແມ່ເອງກໍເຖິງກັບຫາຍໃຈຢ່າງໂລ່ງອົກໄປບາດນຶ່ງ
ແມ່ສລຸບໄປວ່າອັນຫນຸ່ມສາວສໄມໃຫມ່ນີ້ມັນກໍຊ່າງມີວິທີແປກໆທີ່ຈະຊາບຊຶ້ງດວງໃຈຂອງກັນແລະ
ກັນໄດ້ ເມື່ອເຫັນວ່າທຸກສິ່ງດຳເນີນໄປດ້ວຍດີແລະເພື່ອໃຫ້ໂອກາດແກ່ຄູ່ຫນຸ່ມສາວ
ຫລາຍກ່ວານັ້ນອີກ ແມ່ພາຈຶ່ງຂໍຕົວໄປຢ່າງຫລີ້ນອ້ອມສວນສາທາຣະນະກັບລູກຊາຍ

ເວລາກໍຊ່າງຜ່ານໄປຢ່າງເປັນໃຈແລະກໍຢ່າງເຊື່ອມຊ້ອຍ
ໃບໄມ້ສີເຫລືອງໃບແລ້ວໃບເຫລົ່າຕ່າງກໍທະຍອຍກັນປີວວ່ອນລົງມາ
ໃນບາງຄັ້ງກໍຈະເຫັນໃບໄມ້ຊຽວປະປົນຢູ່ໃນນັ້ນຄືກັນ

ບາງທີອາດຈະເປັນຍ້ອນວ່າບັນຍະກາດພາໃຫ້ເປັນ ຫລືບາງທີອາດຈະເປັນຍ້ອນໃບໄມ້
ຫລືບາງທີອາດຈະເປັນຍ້ອນສິ່ງໃດກໍໄດ້ໂດຍສະເພາະກໍແມ່ນຍິງສາວທີ່ນັ່ງຢູ່ຕໍ່ຫນ້າເຂົານີ້
ອິສຣະໃນທັນໃດຈຶ່ງຫລັ່ງໄຫລຄຳເວົ້າອອກມາເປັນສາຍຢ່າງທີ່ບໍ່ເຄີຍມີມາກ່ອນ ເຂົາກ່າວວ່າ




"ພາ ເຈົ້າກະຄິດຄືຂ້ອຍຢູ່ບໍ່ວ່າ ໃບໄມ້ຫລົ່ນນັ້ນເປັນພາບທີ່ງາມທີ່ເປັນຕາເບິ່ງ? "
"ກະຄືຊິແມ່ນຄືຄວາມເຈົ້າວ່າ" ວຽງປະພາຕ່າງກໍເຫັນພ້ອມນຳອິສຣະ
ແມ້ນຫລາຍຄົນຈະວ່າພາບໃບໄມ້ຫລົ່ນ
ພາບຕາເວັນຕົກດິນແລະພາບຄື້ນຟອງທີ່ຖາຖົມກັນເຂົ້າກະທົບຝັ່ງຈະເສົ້າໆອາດໃດວາດນຶ່ງ
ແຕ່ສຳຫລັບນາງແລ້ວ ສິ່ງເຫລົ່ານັ້ນຄືຄວາມງາມຂອງທັມມະຊາດ
ແລະຂອງຊີວິດໂດຍສລຸບລວມໆນັ້ນເອງ

"ເບິ່ງອີກແບບນຶ່ງກໍແມ່ນວ່າ ໃບໄມ້ຫລົ່ນກໍຄືຊີວິດຂອງຄົນເຮົາ
ເຖິງແມ່ນວ່າຄົນເຮົາຈະຕິດແໜ້ນຜູກພັນກັບສິ່ງໃດກໍຕາມອັນລວມໄປເຖິງຜູ່ຄົນ
ເມື່ອເຖິງເວລາທີ່ຈະຕ້ອງຈາກ ເຮົາກໍຈຳເປັນຕ້ອງປ່ອຍປະໃຫ້ສິ່ງນັ້ນໄປ"
ອິສຣະປະສົມປະສານຄວາມເປັນໄປຂອງທັມມະຊາດເຂົ້າກັບປຣັຊຍາ
ສິ່ງທີ່ອິສຣະກ່າວອອກມານັ້ນເຖິງເປັນພຽງຄຳເວົ້າ ວຽງປະພາກໍຮູ້ສຶກເຈັບແປັບຢູ່ໃນຫົວໃຈ
ກໍຄືດັ່ງທີ່ມີຄຳກ່າວເວົ້າວ່າ ຕໍ່ຜູ່ຍິງແລ້ວ ການຮູ້ແລະເຂົ້າໃຈສິ່ງໃດນຶ່ງເປັນເລື້ອງນຶ່ງ
ແຕ່ຄວາມຮູ້ສຶກກໍເປັນອີກເລື້ອງນຶ່ງທີ່ຕ່າງຈາກນັ້ນຄືກັນ
"ພາ ບາງຄັ້ງຄາວຂ້ອຍກໍອິດທີ່ຈະປຽບຕົນເອງໃຫ້ເປັນຄືໃບໄມ້ຫລົ່ນບໍ່ໄດ້
ບາງທີນັ້ນອາດຈະເປັນຄວາມງາມສຳຫລັບຄົນບາງຄົນແຕ່ສໍຫລັບໃບໄມ້ໃບນັ້ນແລ້ວ
ມັນກໍຄືການລາລັບໄປຈາກສິ່ງທີ່ມັນເຄີຍຮັກແລະຫວງແຫນ"
ອິສຣະສາທະຍາຍຄວາມຮູ້ສຶກທີ່ແທ້ຈິງອອກມາ
ເຖິງແມ່ນວ່ານັ້ນຈະເປັນພຽງຄຳທີ່ອຸປມາໄປເຖິງໃບໄມ້ຫລົ່ນກໍຕາມ
ວຽງປະພາເອງໄດ້ແຕ່ນັ່ງງຽບຟັງເຂົາຢ່າງບໍ່ທີທ່າວ່າຈະຂັດຄວາມເຂົາຫຍັງ ອິສຣະກ່າວຕໍ່ໄປວ່າ

"ຖ້າວ່າຂ້ອຍຕ້ອງກາຍເປັນໃບໄມ້ຫລົ່ນໃບນັ້ນ ຂ້ອຍຕ້ອງການຈະຫລົ່ນລົງຕໍ່ຫນ້າຄົນທີ່ຂ້ອຍຮັກ"
ວຽງປະພາບໍ່ເຊື່ອຫູຕົນເອງວ່ານາງໄດ້ຍິນຄໍາວ່າຮັກເປັນຄັ້ງແຮກຈາກອິສຣະ
ຫາກແມ້ນພຽງເຂົາເອີ່ຍຄໍານີ້ໃນວາຣະທີ່ຕ່າງກັນ ນາງຄົງຈະມີຄວາມປາບປື້ມໃນຖ້ອຍຄໍາໆນັ້ນ

ແມ່ພາຫລັງຈາກໄປຍ່າງກັບມາແລ້ວ ແລະເຫັນວ່າທັງສອງຫນຸ່ມຕ່າງກໍຍັງຈູ່ຈີ່ກັນຢູ່
ແມ່ກໍຍິ້ມໃຫ້ດ້ວຍຄວາມພຶງພໍໃຈ ມາບັດນີ້ວຽງປະພາຈະໄດ້ມີຊີວິດຊີວາຄືດັ່ງເຫມືອນເດີມ ແລະ...
ກ່ອນທີ່ແມ່ພາຈະຊື່ນຊົມຕໍ່ໄປໃນມິຕິຫມາຍໃຫມ່ນີ້ ແຈຣີກໍໂຜ່ຫນ້າເຂົ້າມາ
ເຂົາຍ່າງກົງເຂົ້າໄປຫາບ່ອນທີ່ວຽງປະພາແລະອິສຣະກໍາລັງນັ່ງຢູ່
ຕົກໃຈທີ່ບໍ່ຄິດຝັນວ່າເຫດການຈະເປັນແນວນີ້ໂດຍທັນດ່ວນ
ແມ່ພາຈຶ່ງເຮັດສຽງອະຮຶມອະຮັມເພື່ອໃຫ້ຄູ່ຫນຸ່ມສາວຮູ້ວ່າ ສິ່ງທີ່ບໍ່ຄາດຝັນກໍາລັງຈະເກີດຂຶ້ນ

ອິສຣະເປັນບຸກຄົນແຮກທີ່ເງີຍຫນ້າເບິ່ງໄປຂ້າງຫນ້າ
ເຂົາເອງເຖິງກັບປາກບໍ່ອອກເພາະເຫດການທີ່ຜັນແປນີ້
ສັງເກດໄດ້ຈາກໃບຫນ້າທີ່ຕົກຫວູບຂອງອິສຣະ
ວຽງປະພາກໍຮູ້ໂດຍສັນຊາດສະຍານວ່າຜູ່ທີ່ປາກົດຕົວຕໍ່ສາຍຕາອິສຣະນັ້ນກໍຄືບໍ່ແມ່ນໃຜອື່ນ
ນອກຈາກແຈຣີເທົ່ານັ້ນ ຈາກສ່ວນເລິກຂອງຫົວໃຈ ນາງກໍໄດ້ແຕ່ເຝົ້າວິງວອນວ່າ
ຂໍຢ່າໃຫ້ໄດ້ມີຫຍັງເກີດຂຶ້ນເລີຍ ແຕ່ເຖິງຢ່າງໃດອີກໃຈນຶ່ງກໍຮູ້ຢ່າງເຕັມອົກວ່າ ແຈຣີບໍ່ຄືກັບອິສຣະ
"ຂໍໂທດພາທີ່ມາຊ້າ ບໍ່ຫນ້າທີ່ຈະລໍຖ້າກິນເຂົ້າກິນປາຈົນຂ້ອຍມາຮອດມາເຖິງເລີຍ
ໂອ້ພາຂອງຂ້ອຍນີ້ ເຈົ້າກໍຊ່າງເປັນແຟນທີ່ແສນຮັກຂອງຂ້ອຍອີຫລີ"
ແລະກໍດັ່ງສັນຍາລັກທີ່ບໍ່ເປັນສອງຮອງໃຜຂອງເຂົາ ແຈຣີຈຶ່ງຕີແຕ້ມຊະນະໃນທັນທີ

ວຽງປະພາຮູ້ສຶກຂຸ່ນເຄືອງຂຶ້ນມາທີ່ໄດ້ຍິນແຈຣີວ່າຕົນນັ້ນເປັນແຟນຂອງເຂົາ ສໍາຫລັບນາງແລ້ວ
ແຈຣີເປັນພຽງເພື່ອນທີ່ດີ ພວກເຂົາມັກໄປໃສມາໃສນໍາກັນເພາະເຮັດວຽກຢູ່ບ່ອນດຽວກັນ
ແຕ່ນັ້ນບໍ່ຫມາຍຄວາມວ່ານາງເປັນແຟນຂອງເຂົາ
ການເປັນແຟນຫລືຄູ່ຮັກກັນນັ້ນມັນຕ້ອງການເວລາແລະຄວາມສນິດສນົມແນບແຫນ້ນຊຶ່ງນາງບໍ່ຄິດວ່າ ນາງມີໄວ້ໃຫ້ແກ່ແຈຣີເທື່ອ

"ກໍດີທີ່ເຈົ້າມາທັນໄດ້ກິນກັນພໍດີ ແຕ່ເອະ!ເຫດໃດເຈົ້າຈຶ່ງຮູ້ວ່າພວກຂ້ອຍເຮັດມາປີກນິກຢູ່ນີ້?"
ວຽງປະພາໃນທີ່ສຸດກໍຫາວິທີທາງທີ່ຈະຕອກແຈຣີຄືນເຖິງຄວາມມີເລ່ຫລ່ຽມຂອງເຂົາທີ່ຫາວ່າ
ນາງເປັນແຟນຂອງເຂົາ ນີ້ຖ້າເປັນແຟນກັນແທ້
ມີບໍ່ທີ່ນາງຈະບໍ່ບອກໃຫ້ເຂົາຮູ້ເຖິງປີກນິກໃນບ່າຍມື້ນີ້?

"ອຸ່ຍ! ເຮັດເປັນເລື້ອງໃຫຍ່ໄປໄດ້ ຂ້ອຍໂທຫາຫມູ່ຂອງເຈົ້າ
ລາວບອກວ່າຂ້ອຍຄວນຈະມາທີ່ສວນສາທາຣະນະນີ້ໄວໆ ບໍ່ຊັ້ນຂ້ອຍກະຊິພາດໄດ້ກິນອາຫານດີໆ"
ແຈຣີທັງເວົ້າທັງມົ້ມຂອງກິນເຂົ້າປາກ "ໂອໂຮ້ ມີແຕ່ຂອງຂ້ອຍມັກທັງນັ້ນ
ເຈົ້າກໍຈັ່ງແມ່ນຮູ້ໃຈຂ້ອຍວ່າມັກຫຍັງແທ້ໆ"
ໃນຂະນະທີ່ການສົນທະນາຂອງທັງຄູ່ດຳເນີນໄປນັ້ນ
ໃບຫນ້າຂອງອິສຣະກໍຄືຈັ່ງວ່າເຫລືອງຫລ່າຂຶ້ນມາ ຄຳວ່າ "ແຟນຫລືຄູ່ຮັກ"
ແລະຄວາມຮູ້ສຶກທີ່ວ່າວຽງປະພາຄົງຈະເອີນໍຫໍມີກກັບແຈຣີຢ່າງໃດຢ່າງນຶ່ງເຮັດໃຫ້ເຂົາຢາກຈະມຸດ
ແຜ່ນດິນຫນີໃຫ້ໄປໄກໆ ເຂົາສາມາດທີ່ຈະທົນທຸກສິ່ງຢ່າງໄດ້ແຕ່ຄວາມຮູ້ສຶກທີ່ວ່າ
ຕົນນັ້ນຈະສູນເສັຽວຽງປະພາມັນທໍຣະມານຈິດໃຈເຂົາຍິ່ງຫນັກ

ເນື່ອງດ້ວຍວ່າອິສຣະບໍ່ອາດສາມາດທີ່ຈະທົນທານຕໍ່ພາບທີ່ເຮັດໃຫ້ຫົວໃຈຂອງເຂົາຕ້ອງປິ່ນປີ້ນີ້ໄດ້
ເຂົາຈຶ່ງປຸບປັບລຸກຂຶ້ນແລະ...
"ຂໍໂທດຫລາຍໆ ຫາກໍ່ຮູ້ເມືອວ່າຂ້ອຍຈະຕ້ອງໄດ້ກັບກ່ອນແລ້ວ" ບໍ່ທັນທີໃຜຈະວ່າຫຍັງ
ອິສຣະກໍພວດພາດກັບຄືນໄປຫາລົດຂອງເຂົາຢ່າງບໍ່ທອດສາຍຕາຄືນຫລັງແມ້ນແຕ່ພຽງບາດດຽວ
ໃບໄມ້ອີກຈຳນວນນຶ່ງໄດ້ປິວວ່ອນລົງມາຂ້າງຫລັງເຂົາ ເຂົາຍ່ອມຮັບວ່າແຕ່ລະບາດກ້າວ
ທີ່ກ້າວເດີນອອກໄປຈາກວຽງປະພານັ້ນມັນຊ່າງເຜົາພານດວງໃຈເຂົາເຫລືອເກີນ
ນີ້ເຂົາຈະມີໂອກາດໄດ້ບອກເອີຍຄວາມໃນໃຈທີ່ແທ້ຈິງຂອງເຂົາທີ່ມີຕໍ່ນາງອີກບໍ່?
ຫລືວ່າເຂົາຈະຕ້ອງຕາຍຈາກໄປໂດຍບໍ່ມີພຽງຍຶດນຶ່ງຂອງຄວາມຮັກຈາກນາງທີ່ມີຕໍ່ເຂົາເລີຍ?

X.



ຫິມະກຳລັງປິວວ່ອນລົງມາຢູ່ຂ້າງນອກ
ຈົດຫມາຍກ້ານນຶ່ງວາງໄວ້ຢູ່ເທິງບ່ອນນອນຂອງວຽງປະພາຂຽນໄວ້ວ່າ:

ວຽງປະພາທີ່ຄິດເຖິງ

ນັບວ່າເປັນກຽດຕິຂອງຂ້ອຍຢ່າງຍິ່ງທີ່ຂ້ອຍໄດ້ມີໂອກາດຮູ້ຈັກກັບເຈົ້າ
ຂ້ອຍບໍ່ເຄີຍຄິດຝັນມາກ່ອນວ່າເຈົ້າຈະດີຕໍ່ກັບຄົນເຊັ່ນຂ້ອຍ  ບາງທີອາດຈະເປັນຍ້ອນວ່າຂ້ອຍບໍ່ເຄີຍ
ປະສົບພົບພໍ້ກັບມິຕພາບດັ່ງກ່າວມາກ່ອນ
ຂ້ອຍຈຶ່ງອົດບໍ່ໄດ້ທີ່ຈະຖນອມທອມຮັກສິ່ງທີ່ເຈົ້າມອບໃຫ້ນັ້ນສເມີດ້ານຊີວິດຂ້ອຍເອງ
ອີກຢ່າງກໍແມ່ນວ່າໃນເມື່ອຂ້ອຍບໍ່ສາມາດທີ່ຈະໄດ້ເຫັນເຈົ້າອີກຕໍ່ໄປດັ່ງທີ່ດວງໃຈດວງນີ້ຮຽກຮ້ອງຕ້
ອງການ  ຂ້ອຍຈຶ່ງຢາກຈະບອກເຈົ້າວ່າມິຕພາບທີ່ດີງາມທີ່ເຈົ້າມອບໃຫ້ຂ້ອຍນັ້ນ
ຈະຕຣາແຫນ້ນຢູ່ໃນກະມົນດວງນີ້ໄປຕາບເທົ່າໃດໆ
ຂ້ອຍຕ້ອງຂໍໂທດທີ່ບໍ່ສາມາດມາສັ່ງລາເຈົ້າດ້ວຍຕົວເອງ
ຂ້ອຍຄິດວ່າຂ້ອຍຄົງບໍ່ສາມາດທີ່ຈະທົນຄວາມເຈັບຊ້ຳທີ່ຈະຕ້ອງມາເຫັນເຈົ້າເປັນຄັ້ງສຸດທ້າຍ
ຂ້ອຍຮູ້ສເມີດີວ່າເຈົ້າຄວນຈະໄດ້ຮັບແຕ່ສິ່ງທີ່ດີງາມໃນຊີວິດດັ່ງນັ້ນຂ້ອຍຈຶ່ງບໍ່ຢາກໃຫ້ການຈາກໄປເ
ທື່ອນີ້ຂອງຂ້ອຍກະທົບກະເທືອນເຖິງຄວາມສັມພັນອັນດີງາມທີ່ເຈົ້າມີໄວ້ໃຫ້ຕໍ່ຊາຍຄົນອື່ນ

ວຽງປະພາ  ໃນຂະນະທີ່ເຈົ້າໄດ້ອ່ານຈົດຫມາຍສະບັບນີ້
ຂ້ອຍຄົງຈະຢູ່ຫ່າງໄກຈາກເຈົ້າຄົນລະຟາກໂລກແລ້ວ
ມະຫາສມຸດຈະເປັນສິ່ງທີ່ຂວາງກັ້ນທາງລະຫວ່າງເຮົາສອງ
ຂ້ອຍຄິດວ່ານັ້ນຄົງຈະເປັນການດີທັງກັບເຈົ້າແລະຂ້ອຍ  ກໍຄືດັ່ງທີ່ເຈົ້າຄົງຈະຮູ້
ຂ້ອຍນີ້ບໍ່ວ່າຍາມໃດກໍຕ້ອງການທີ່ຈະກັບຄືນໄປສ້າງສາບ້ານເກີດເມືອງນອນ
ແລະໃນຄວາມຝັນອັນເຈີດຈ້ານັ້ນ  ຂ້ອຍປາຖນາໄວ້ວ່າເຈົ້າຈະເປັນສ່ວນນຶ່ງຂອງຄວາມຝັນນີ້
ແລະຫາກນັ້ນເປັນຈິງ  ຂ້ອຍຄົງຈະບໍ່ຕ້ອງສູນເສັຽສິ່ງໃດສິ່ງນຶ່ງທີ່ຂ້ອຍນັ້ນຮັກເປັນຊີວິດຈິດໃຈ
ແຕ່ກໍຄືຢ່າງວ່າຄວາມຈິງນັ້ນມັນແສນໂຫດຮ້າຍ  ມາບັດນີ້ເມື່ອປາສຈາກເຈົ້າທີ່ຈະມາຢູ່ຄຽງຂ້າງຂ້ອຍ
ສິ່ງທີ່ເຫລືອສຳຫລັບຂ້ອຍກໍຄືການອຸທິດທຸກສິ່ງທຸກຢ່າງທີ່ມີຂ້ອຍເພື່ອແຜ່ນດິນແມ່
ແຜ່ນດິນທີ່ໃຫ້ຄວາມເປັນເອກລັກຂອງຂ້ອຍ  ແລະຜູ່ຄົນທີ່ຫລໍ່ລ້ຽງຈິດວິນຍານຂອງຂ້ອຍນັ້ນຄືນ
ເຖິງຢ່າງໃດກໍດີ  ກໍຂໍໃຫ້ເຈົ້າໄດ້ຮັບຮູ້ວ່າ
ໃນໂລກນີ້ຈະບໍ່ມີສິ່ງໃດທີ່ຈະເອົາມາແລກປ່ຽນແທນຕົວເຈົ້າໄດ້
ເພາະຕາບໃດທີ່ລົມຫາຍໃຈຂອງຂ້ອຍຍັງມີ
ຂ້ອຍກໍຈະຍັງຄົງຖນອມທອມຮັກອະດີດທີ່ຂ້ອຍໄດ້ເຄີຍພົບເຈົ້າ  ແລະຖ້າເຈົ້າອະນຸຍາດໃຫ້
ຂ້ອຍກໍຈະວ່າ  ທີ່ຂ້ອຍໄດ້ຮັກເຈົ້າ

*ດ້ວຍຄວາມຮັກແພງ*

*ອິສຣະ*

*ປ.ລ. ກະຣຸນາສົ່ງຄວາມປາຖນາດີຂອງຂ້ອຍມາສູ່ຄອບຄົວຂອງເຈົ້າແທນຂ້ອຍດ້ວຍ*

ວຽງປະພາສະອື້ນໃນຫົວອົກໃນທຸກຄັ້ງທີ່ນາງຄິດເຖິງພາບເກົ່າໆທີ່ຍັງມີອິສຣະຢູ່
ສາມເດືອນເຕັມໆຜ່ານໄປພາຍຫລັງທີ່ນາງແລະເຂົາໄດ້ພົບກັນເປັນຄັ້ງສຸດທ້າຍທີ່ສວນສາທາຣະນະ
ນັ້ນ ແລະກ່ອນທີ່ນາງຈະຕະຫນັກວ່າເຂົາມີຄວາມຫມາຍຫລາຍຂນາດໃດຕໍ່ຊີວິດຂອງນາງ
ຫລືຈະເອີ່ຍວາຈີໃດໆອອກມາໃຫ້ເຂົາໄດ້ຍິນອີກ ເຂົາກໍຕ້ອງມາຈາກໄປແລ້ວ
ຕໍ່ໄປນີ້ມັນຄົງຈະບໍ່ມີໃຜອີກທີ່ຈະເຂົ້າມາແທນທີເຂົາໃນດວງໃຈຂອງນາງໄດ້
ນີ້ບໍ່ອັນທີ່ເອີ້ນກັນວ່າຄວາມຮັກ?

ຫິມະໂປຍລົງມາອີກແລ້ວ ທຸກໆບ່ອນປົກຄຸມໄປດ້ວຍສີຂາວຂອງຫິມະ – ຫລັງຄາເຮືອນ
ທາງຮ່ອມນ້ອຍທີ່ຕັດເຂົ້າຫນ້າບ້ານ ລົດທີ່ຈອດຢູ່ຂ້າງນອກເຮືອນ
ໃບຫຍ້າແລະກິ່ງກ້ານຂອງຕົ້ນໄມ້ ອາກາດປີນີ້ສຸດແສນທີ່ຈະຫນາວເຢັນ
ຫາກແມ້ນວ່າອິສຣະຍັງຄົງຢູ່ທີ່ນີ້ ຫາກແມ້ນພຽງ...

ນ້ຳຕາໄຫລຍ້ອຍລົງເທິງແກ້ມຂອງນາງເມື່ອເຫັນແມ່ເຂົ້າມາໃນຫ້ອງ
"ແມ່! " ທຸກສິ່ງຢ່າງແມ່ນອອກມາໃນຄຳເວົ້າຄຳດຽວນັ້ນຫມົດ
ແລະເມື່ອແມ່ຂອງນາງອ້າແຂນຮັບເອົານາງເຂົ້າສູ່ອ້ອມອົກ
ວຽງປະພາກໍຖລາຕົວເຂົ້າໃສ່ແລະຮ້ອງໄຫ້ອອກມາດັ່ງເດັກນ້ອຍ
ດ້ວຍຝາມືຂອງແມ່ທີ່ລູບຢ່າງລະມຽດລະໄມເທິງເຮືອນຜົມຂອງນາງ
ນາງກໍປ່ອຍນ້ຳຕາທີ່ຍັງຄົງເຫລືອຄ້າງອອກມາໃຫ້ຫມົດ
ມັນບໍ່ຈຳເປັນຕ້ອງມີຫຍັງທີ່ຈະເວົ້າຈະວ່າອີກໃນຂະນະທີ່ຫິມະໂປຍລົງມາເປັນສາຍ
ຈາກຟາກຟ້າລົງສູ່ດິນໃນຂະນະກະວີທີ່ວາງໄວ້ຂ້າງໆຫມອນອ່ານຕໍ່ໄປວ່າ...

ແຕ່ຂ້ອຍຕ້ອງເບິ່ງ
ຕ້ອງມືນຕາຈ້ອງມອງ
ຊີວິດຖ້າບໍ່ສູ້
ຈະຢູ່ໄປມີຄ່າຫຍັງ?

ສາມສີ່ຫ້າຫົກເຈັດໃບ
ລອຍລົງມາລົງມາອີກຢ່າງແຊ່ມຊ້ອຍ

ຂ້ອຍຕັ້ງໃຈເບິ່ງ

ຄັ້ງນີ້ມັນງາມມີສີລປໃນຕົວ
ຫລິ່ນອີກແລ້ວແປດເກົ້າສິບໃບ...
ເມື່ອຟ້າຝົນລົມແດງຜ່ານໄປ
ຄວາມຫວານຊື່ນກໍຕິດຕາມມາ
ພ້ອມກັບໃບໄມ້ຫລິ່ນໃບສຸດທ້າຍ

**ຈົບບໍຣິບຸນ**

ພຶສພາ ໒໐໐໐

(ແປເປັນພາສາລາວແລ້ວໃນເດືອນກໍຣະກະດາ ໒໐໐໙)

